ໂຄງການ
ປົກປັກຮັກສາ
ໜັງສືໃບລານລາວ
ການຮ່ວມມື ລາວ-ເຢຍລະມັນ

# ຂ່າວໃບລານ

ປີທີ VIII ສະບັບທີ 15* ມີນາ 2000

PRESERVATION OF LAO MANUSCRIPTS PROGRAMME,
LAO-GERMAN COOPERATION. NEWS BULLETIN ✱ March 2000



## ກອງປະຊຸມທີ່ ແຂວງອັດຕະປື

ແຂວງ ອັດຕະປືຕັ້ງຢູ່ໃຕ້ສຸດຂອງປະເທດລາວ, ທາງທິດໃຕ້ຂອງແຂວງ ມີຊາຍແດນຕິດກັບປະເທດຫວຽດນາມ. ມີທາງຄົມມະນາຄົມເກືອງ ແຂວງ ຈຳປາສັກ ແລະ ແຂວງເຊກອງ, ເປັນແຂວງນຶ່ງທີ່ເກົ່າແກ່ຕັ້ງເດີມມີຊື່ສຽງຕິດພັນກັບປະຫວັດສາດ, ມີຄວາມອຸດົມຮັ່ງມີທາງຊັບພະຍາກອນທຳມະຊາດ, ສິ່ງແວດລ້ອມອຸດົມສົມບູນ, ຫລາກຫລາຍດ້ວຍຮີດຄອງປະເພນີຂອງປະຊາຊົນບັນດາເຜົ່າ, ກຸ້ມຕົນເອງທາງດ້ານສະບຽງອາຫານ ອັນພົ້ນເດັ່ນ ແມ່ນຄວາມເຫລື້ອມໃສ ທາງພຸດທະສາສະໜາມາແຕ່ບູຮານ, ມີຄວາມສາມັກຄີຊ່ວຍເຫລືອກັນຕາມຄຳສັ່ງສອນຂອງບັນພະບຸລຸດ ອັນໄດ້ກາຍມາເປັນມະໂນຄະຕິຂອງປະຊາຊົນແຂວງອັດຕະປືແຕ່ໃດໆມາ. ພວກເຮົາຈະ ເຫັນໄດ້ຈາກສິ່ງກໍ່ສ້າງຂອງຄົນບູຮານໄດ້ເຮັດໄວ້ໃຫ້ຄົນຮຸ່ນຫລັງສືບທອດເຊົາລົບນັບກື ສະແດງນ້ຳໃຈຄວາມເຫລື້ອມໃສທາງສາສະໜາຂອງປະຊາຊົນ ແຂວງ ອັດຕະປື. ເພື່ອເປັນການຕອບສະໜອງຄວາມຕ້ອງການ ແລະ ປະຕິບັດຕາມທິດ



ປັນຍາກາດ ໃນກອງປະຊຸມ

ຊີ້ນຳຂອງກະຊວງກະແຫລງຂ່າວ ແລະ ວັດທະນະທຳ, ໃນຕອນເຊົ້າຂອງວັນທີ 9 ເມສາ 1998 ກອງປະຊຸມວິທີວິທະຍາການປົກປັກຮັກສາຫນັງສືໃບລານ ທີ່ ແຂວງ ອັດຕະປື ກໍ່ໄດ້ໄຂຂຶ້ນຢ່າງເປັນທາງການ, ຢູ່ທີ່ຫ້ອງການຈັດຕັ້ງມະຫາຊົນຂອງແຂວງ ໂດຍມີ ທ່ານ ຄຳເກີດ ເວີນຄຳ ກຳມະການສູນກາງພັກ ເລຂາພັກແຂວງ ເຈົ້າແຂວງອັດຕະປືເປັນປະທານໃນກອງປະຊຸມ ໃຫ້ກຽດເຂົ້າຮ່ວມມີ ທ່ານຄຳເສັງ ສຸນດາຣາ ຫົວຫນ້າກົມພິມຈຳຫນ່າຍຫໍສະຫມຸດ ແລະ ປ້າຍ, ທ່ານບາງ ກົງເດືອນ ເນດຕະວົງ ຫົວຫນ້າໂຄງການປົກປັກຮັກສາຫນັງສືໃບລານລາວ, ທ່ານ ດຣ.ຣະຣັບ ຣຸນດິອຸສ ຜູ້ຕາງຫນ້າສະຖານທູດ ສ.ສ.ເຢຍຣະມັນ ທັງເປັນທີ່ປຶກສາກິດຕິມະສັກ (ຊຽວຊານ) ປະຈຳໂຄງການໃບລານລາວ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈາກພະແນກກະແຫລງຂ່າວແຂວງ, ເມືອງ, ພະສົງ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງອ້ອມຂ້າງເຂົ້າຮ່ວມຈຳນວນ 60 ຄົນ. ໃນກອງປະຊຸມ ທ່ານ ຄຳເກີດ ເວີນຄຳ ເຈົ້າແຂວງອັດຕະປື ໄດ້ກ່າວເປີດ. ບາງຕອນ ທ່ານກ່າວວ່າ : " **ວຽກງານກະແຫລງຂ່າວ ແລະ ວັດທະນະທຳຢູ່ແຂວງອັດຕະປື ໄດ້ມີບາດກ້າວຂະຫຍາຍຕົວດີສົມຄວນ ການປົກປັກຮັກສາມໍລະດົກວັດທະນະທຳ ອັນດີງາມຂອງຊາດ ກໍ່ໄດ້ຮັບຄວາມເອົາໃຈໃສ່ ດັ່ງນັ້ນ ການສຳມະນາຄັ້ງນີ້ ສຸດທີ່ມີຄວາມຫມາຍຕໍ່ວຽກງານຄຸ້ມຄອງ ແລະ ປົກປັກຮັກສາມໍລະດົກວັດທະນະທຳ ເພາະວ່າໄດ້ເປີດໂອກາດໃຫ້ພວກເຮົາໄດ້ຄົ້ນຄວ້າ, ຂຸດຄົ້ນ ແລະ ໄດ້ໄຂເສັ້ນທາງໃຫ້ນັກວິຊາການມີເງື່ອນໄຂຂຶ້ນບັນຊີຫນັງສືຜູກໃບລານໃນແຂວງຂອງພວກເຮົາ, ພວກເຮົາຈະມີບົດຮຽນທາງດ້ານເຕັກນິກ ນຳໃຊ້ຄວາມສາມາດບົ່ມຊ້ອນຂອງທ້ອງຖິ່ນ ຈະເຮັດໃຫ້ນັກຮົບວັດທະນະທຳນຳໃຊ້ຫນັງສືໃບລານ ໃຫ້ເປັນປະໂຫຍດແກ່ສັງຄົມຍຸກສະໄຫມ**". ໃນວາລະ



ການຕຳ່ແຜ ດ້ວຍຫູກແອວ ນຶ່ງໃນເອກະລັກຂອງປະຊາຊົນ ບັນດາເຜົ່າ ແຂວງອັດຕະປື

ກອງປະຊຸມຜູ້ຕາງໜ້າແຕ່ລະເມືອງ ແລະ ບັນດາທ່ານຜູ້ແທນແຕ່ລະພາກສ່ວນທີ່ໄດ້ເຂົ້າຮ່ວມ, ຕ່າງກໍ່ປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາ ເຫັນໄດ້ທັງຜົນດີ ແລະ ການຕົກເຮ່ຍເສຍຫາຍຂອງໜັງສືໃບລານໃນໄລຍະຜ່ານມາ. ກອງປະຊຸມໄດ້ດຳເນີນໄປຈົນເຖິງວັນທີ 11 ເມສາ ຈຶ່ງໄດ້ອັດລົງຢ່າງຈົບງາມ.

ກອງປະຊຸມຢູ່ແຂວງອັດຕະປືໄດ້ກາຍເປັນສຽງລະຄັງດັງປ່າວເຕືອນສະຕິຕື່ນຕົວ ຂອງນັກຮົບວັດທະນະທຳ ກໍຄືຂອງພໍ່ແມ່ປະຊາຊົນ ພະສົງອົງຄະເຈົ້າໄດ້ເຂົ້າໃຈໃນມໍລະດົກວັດທະນະທຳອັນລ້ຳຄ່າ ກໍ່ຄືຮູ້ຮັກ ແລະ ຫວງແຫນໜັງສືໃບລານລາວຂຶ້ນຕື່ມອີກຢ່າງເປັນຮູບພະທຳ ເພື່ອປົກປັກຮັກສາ ແລະ ນຳໃຊ້ໃຫ້ຄູ່ກັບວັດທະນະທຳລາວເຮົາຕະລອດໄປ ໃຫ້ສົມກັບຄຳປຽບທຽບວ່າ " ອັດຕະປືປົ້ງຂາຍຄຳແລກໄກ່ ".

✍ ຄຳສິງ ພົງສະຫວ່າງ



ການໃສ່ບາດຢາດນ້ຳເປັນກິດຈະວັດປະຈຳວັນຂອງປະຊາຊົນແຂວງ ອັດຕະປື



ຜົນຜະລິດສະບຽງອາຫານກຸ້ມກິນເອງໂດຍພື້ນຖານ (ຕະລາດສົດແຂວງອັດຕະປື)

# ເຊີນອ່ານ


- ກອງປະຊຸມທີ່ອັດຕະປື ໜ້າ 1
- ໂຄງການ...ໃນທັດສະນະຂອງຄົນ... ໜ້າ 4
- ບົດປະກອບຄຳເຫັນ ໜ້າ 5
- ວຽກສຳຫລວດທີ່ອັດຕະປື ໜ້າ 7
- ມອບທຶນສຶກສາແກ່... ໜ້າ 11
- ກອນຫລານສອນຍ່າ ໜ້າ 12
- ບໍລິຄຳໄຊໃຈເຖິງ ໜ້າ 14
- ເມືອງບໍລິຄັນ (ເມືອງເກົ່າ) ໜ້າ 15
- ສະຖິຕິໜັງສືໃບລານ ແລະ ຜັບສາ... ໜ້າ 16
- ໜັງສືສຳຄັນທີ່ພົບເຫັນ... ໜ້າ 20

# ໂຄງການປົກປັກຮັກສາຫນັງສືໃບລານລາວ *ໃນທັດສະນະຂອງຄົນເຢຍຣະມັນ*

ທ່ານສາສະດາຈານ ດຣ. ຣະຮັນ ຣຸນດິອຸສ ກ່າວໃນກອງປະຊຸມ ທີ່ແຂວງອັດຕະປື



**ໂຄງການ** ປົກປັກຮັກສາຫນັງສືໃບລານລາວ ນັບວ່າເປັນໂຄງການທີ່ມີລັກສະນະພິເສດ ຖ້າທຽບໃສ່ໂຄງການທາງດ້ານວັດທະນະທຳອື່ນໆ ຂອງລັດຖະບານເຢຍຣະມັນ ຄື: ເປັນໂຄງການໃຫຍ່ ໃນແງ່ທີ່ວ່າ ໂຄງການນີ້ບໍ່ໄດ້ເຮັດວຽກຢູ່ສະເພາະຈຸດໃດຈຸດຫນຶ່ງ ແຕ່ເຮັດວຽກຄຸ້ມຄອງໄປທົ່ວປະເທດລາວທັງ 17 ແຂວງ ອັນນີ້ ກໍ່ນັບວ່າເປັນໂຄງການໃຫຍ່ ແລະ ກວ້າງຂວາງ.

ໂຄງການນີ້ໃຊ້ໄລຍະດົນນານຄື : ກຳນົດເວລາແຕ່ 8 ປີ ຫາ10 ປີ. ໂຄງການວັດທະນະທຳ ຕ່າງໆ ທີ່ທາງລັດຖະບານເຢຍຣະມັນ ໃຫ້ທຶນຊ່ວຍເຫລືອສ່ວນຫລາຍຈະມີອາຍຸພຽງແຕ່ 2,3, 4,5 ປີ. ໂຄງການນີ້ມີລະຍະຍາວ ກໍ່ຍ່ອມມີບັນຫາເລື່ອງງົບປະມານແດ່ ທັງນີ້ຍ້ອນວ່າກົດເກນລັດຖະບານເຢຍຣະມັນໂດຍສະເພາະ ກະຊວງການຕ່າງປະເທດຂອງເຢຍຣະມັນເປັນຜູ້ອຸປະຖຳໂຄງການນີ້ໂດຍກົງເພິ່ນກໍ່ຈະອະນຸມັດເປັນແຕ່ລະປີ ສະນັ້ນໂຄງການປົກປັກຮັກສາຫນັງສືໃບລານນີ້ ກໍ່ຕ້ອງຂໍງົບປະມານແຕ່ລະປີ ເທົ່າທີ່ທາງລັດຖະບານເຢຍຣະມັນຈະເຫັນສົມຄວນແບ່ງປັນໃຫ້ ຫມາຍວ່າ : ເຮົາບໍ່ມີການຄ້ຳປະກັນວ່າໂຄງການນີ້ຊິເຮັດວຽກໄດ້ຕະຫລອດ 8 - 10 ປີ. ມັນຂຶ້ນຢູ່ທີ່ຜົນງານ ແລ້ວລັດຖະບານເຢຍຣະມັນຈະຕ້ອງຕັດສິນຕາມຄຳຂໍຮ້ອງຂອງຜູ້ດຳເນີນ ໂຄງການ ວ່າຈະຈັດສັນງົບປະມານໃຫ້ພຽງພໍຫລືບໍ່. ເຊິ່ງໄລຍະຫລັງນີ້ ທາງເຢຍຣະມັນກໍ່ປະສົບບັນຫາທາງເສດຖະກິດ ສ່ວນຫລາຍ ຕ່າງປະເທດບໍ່ເຂົ້າໃຈ ແລະ ບໍ່ເຫັນຄວາມ ໃຫຍ່ຫລວງຂອງບັນຫາ ຍັງຖືວ່າ ເຢຍຣະມັນເປັນປະເທດຮັ່ງມີ ແຕ່ສຳ ລັບຊາວເຢຍຣະມັນກືວ່າເປັນບັນຫາ ຫນັກຫນ່ວງ ຍົກຕົວຢ່າງ: ມີຄົນ ຫວ່າງງານບໍ່ມີວຽກເຮັດ10 ກວ່າສ່ວນ ຮ້ອຍຂອງຄົນເຢຍຣະມັນ.

ສະນັ້ນ ການຂໍທຶນຮອນຂອງໂຄງການຕ່າງໆນັບຈະຍາກເຂົ້າ ເຊິ່ງມີແນວໂນ້ມຢູ່ທົ່ວໄປ ໃນການຈັດງົບປະມານສຳລັບໂຄງການຕ່າງໆ ຖ້າແມ່ນງົບປະມານກ່ຽວກັບປັດໃຈ 4 ທາງລັດຖະບານເຢຍຣະມັນ ກໍ່ພ້ອມທີ່ຈະໃຫ້ການຊ່ວຍເຫລືອຢ່າງສົມຄວນ ແຕ່ເລື່ອງວັດທະນະທຳ ທີ່ເປັນປັດໃຈ 5 ຖ້າບໍ່ມີ ຄົນກໍ່ຍັງຢູ່ ສະນັ້ນງົບປະມານທາງວັດທະນະທຳຈຶ່ງຖືກຕັດລົງໄປແຕ່ລະປີ. ກອງທຶນສຳລັບການຊຸກຍູ້, ການອະນຸລັກວັດທະນະທຳ ໃນຕ່າງປະເທດຕ່າງກໍ່ຖືກຕັດລົງ 10-14% ແລ້ວ. ສະນັ້ນທາງໂຄງການປົກປັກຮັກສາຫນັງສືໃບລານຕ້ອງເຮັດວຽກແທ້, ດຸຫມັ່ນ ແລະ ມີປະສິດທິພາບໃນການເຮັດວຽກ ຖ້າວ່າຢາກໄດ້ທຶນສືບຕໍ່ວຽກໃຫ້ສຳເລັດ. ຕ້ອງມີການປຸກລະດົມຂົນຂວາຍເພື່ອໃຫ້ຫມາກຜົນ ແລະ ຜົນສຳເລັດຂອງໂຄງການໄດ້ຮັບການເຜີຍແຜ່ຢ່າງກວ້າງຂວາງ ເຮັດໃຫ້ລັດຖະບານເຢຍຣະມັນ ເຂົ້າໃຈວ່າໂຄງການນີ້ແມ່ນໂຄງການດີເປັນພິເສດ ປະສົບຜົນສຳເລັດສູງ. ໃນໄລຍະຜ່ານມາດ້ວຍການຮ່ວມມື ດ້ວຍຄວາມເມດຕາກະລຸນາ ຂອງກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ຊ່ວຍເຜີຍແຜ່ເຮັດໃຫ້ໂຄງການໄດ້ຮັບການສະຫນັບສະຫນູນຢ່າງກວ້າງຂວາງ ເຮັດໃຫ້ລັດຖະບານເຢຍຣະມັນ ມີຄວາມພໍໃຈໃນຜົນງານ ຈົນມີນັກຂ່າວສື່ມວນຊົນຕ່າງປະເທດ ເຂົ້າມາຢ້ຽມຢາມໂຄງການ ແລະ ນຳຜົນງານໄປຂຽນຂ່າວ ເຮັດໃຫ້ຕ່າງປະເທດຍ້ອງຍໍໂຄງການນີ້. ໂຄງການນີ້ມີຈຸດພິເສດ ສະເພາະຍ້ອນໄດ້ຮັບການຮ່ວມມື ຈາກຄົນທີ່ກ່ຽວຂ້ອງ

ເຊັ່ນ: ພະສົງ, ສາມະເນນ, ເຖົ້າແກ່ ແນວໂຮມ ແລະ ປະຊາຊົນ. ໂຄງການນີ້ ໄດ້ຮັບການຮ່ວມມືຫລາຍກວ່າໂຄງການເສດຖະກິດຫລາຍໂຄງການ ຢູ່ ສ.ສ.ເຢຍຣະມັນ ເຊິ່ງທາງສະຖານທູດເອງ ກໍສະແດງຄວາມຊົມເຊີຍ ຜູ້ສະໝັກໃຈຮ່ວມມື ແມ່ນສິ່ງທີ່ສະແຫວງຫາໄດ້ຍາກທີ່ສຸດ ທຸກໂຄງການຕ້ອງການໃຫ້ຜູ້ທີ່ຮັບເງິນ. ຜູ້ຮັບຄວາມຊ່ວຍເຫລືອນັ້ນ ເຂົ້າມາມີສ່ວນຮ່ວມໃນການພັດທະນາຕາມເປົ້າຫມາຍ ຂອງໂຄງການ. ໂຄງການໃບລານເປັນໂຄງການທີ່ດີ ເປັນໂຄງການຕົວຢ່າງ.

❖❖❖

# ບົດປະກອບຄຳເຫັນ

ທ່ານ ສຳເກີດ ເວີນສຳ
*ເລຂາພັກແຂວງ, ເຈົ້າແຂວງອັດຕະປື*



ກອງປະຊຸມສຳມະນາວິທີວິທະຍາ ໃນການປົກປັກຮັກສາຫນັງສືໃບລານ ໄດ້ຈັດຂຶ້ນຢູ່ແຂວງອັດຕະປືຄັ້ງນີ້ ເປັນຄັ້ງປະຫວັດສາດ ໃນທ່າມກາງທົ່ວພັກ - ທົ່ວກອງທັບ ແລະ ທົ່ວປວງຊົນພວມອອກແຮງແຂ່ງຂັນປະຕິບັດມະຕິ IV ສະໄຫມທີ VI ຂອງສູນກາງພັກ, ມະຕິກອງປະຊຸມໃຫຍ່ ຄັ້ງທີ IV ຂອງອົງຄະນະພັກແຂວງ ທັງຜັນຂະຫຍາຍເນື້ອໃນຜົນສຳເລັດຂອງກອງປະຊຸມຄັ້ງປະຖົມມະລືກຂອງສະພາແຫ່ງຊາດ ຊຸດ ທີ IV ກໍຄືປະຕິບັດແຜນພັດທະນາເສດຖະກິດສັງຄົມຂອງລັດ ອັນໄດ້ເຮັດໃຫ້ສະພາບຊີວິດການເປັນຢູ່ຂອງປະຊາຊົນໃນແຂວງອັດຕະປື ໄດ້ຮັບການປັບປຸງໃຫ້ດີຂຶ້ນເປັນກ້າວໆ, ການຜະລິດສະບຽງອາຫານກໍ່ກຸ້ມຕົນເອງໂດຍພື້ນຖານ ແລະ ມີແຮໄວ້ຂາຍອອກຈຳນວນນຶ່ງ ພ້ອມກັບການຂະຫຍາຍຕົວທາງເສດຖະກິດ ວຽກງານຖະແຫລງຂ່າວ ແລະ ວັດທະນະທຳກໍໄດ້ມີບາດກ້າວຂະຫຍາຍຕົວດີສົມຄວນ ການປົກປັກຮັກສາມໍລະດົກວັດທະນະທຳອັນດີງາມຂອງຊາດ ກໍໄດ້ຮັບຄວາມເອົາໃຈໃສ່ຢ່າງຍິ່ງ ດັ່ງນັ້ນ ການສຳມະນາຄັ້ງນີ້ ສຸດທີ່ມີຄວາມຫມາຍຕໍ່ວຽກງານຄຸ້ມຄອງ ແລະ ປົກປັກຮັກສາວັດທະນະທຳ ເພາະມັນໄດ້ເປີດໂອກາດໃຫ້ພວກເຮົາ ແລະ ນັກວິຊາການມີເງື່ອນໄຂຄົ້ນຄວ້າ ແລະ ຂຶ້ນບັນຊີຂອງຫນັງສືໃບລານ ຈະມີບົດຮຽນທາງດ້ານເຕັກນິກວິຊາການ ການນຳໃຊ້ຄວາມສາມາດບົ່ມຊ້ອນຂອງທ້ອງຖິ່ນ ຈະເຮັດໃຫ້ນັກຮັບວັດທະນະທຳພວກເຮົານຳໃຊ້ຫນັງສືໃບລານໃຫ້ເປັນປະໂຫຍດແກ່ສັງຄົມຍຸກສະໄຫມ ໃນໂອກາດນີ້ ຂ້າພະເຈົ້າເຊື່ອວ່າ ບັນດາຜູ້ແທນທີ່ເຂົ້າຮ່ວມກອງປະຊຸມຈະໄດ້ນຳເອົາເນື້ອໃນຈິດໃຈຂອງກອງປະຊຸມຄັ້ງນີ້ ໄປປະຕິບັດຢູ່ທ້ອງຖິ່ນຂອງຕົນໃຫ້ປະກົດຜົນເປັນຈິງ.



**ທ່ານ ອິນທອງ ມະໂນທຳ**

ຫົວໜ້າພະແນກກຸຍແຫລວງອ່າວ ແລະ ວັດທະນະທຳ ແຂວງ ອັດຕະປື.

ແຂວງອັດຕະປືເປັນແຂວງທີ່ເກົ່າແກ່ດັ້ງເດີມ ວັດທະນະທຳ ແລະ ອະຣິຍະທຳອັນເກົ່າແກ່ທີ່ເປັນເອກະລັກຢູ່ໃນແຂວງແມ່ນມີຫລາຍຢ່າງ ທີ່ສະດຸດຕາເຊັ່ນ : ວັດວາອາຣາມ, ພະທາດເຈດີຕ່າງໆ ທີ່ຄົນບູຮານສ້າງໄວ້ເປັນບ່ອນເຄົາລົບນັບຖືເຫລື້ອມໃສທາງສາສະໜາຂອງປະຊາຊົນແຂວງອັດຕະປື. ສະພາບວັດຕົວຈິງຢູ່ແຂວງອັດຕະປື ມີວັດທີ່ເກົ່າແກ່ຫລາຍແຫ່ງໂດຍສະເພາະ ຢູ່ເມືອງໄຊເຊດຖາ ອັນເປັນຕົ້ນກຳເນີດທີ່ມາຂອງແຂວງອັດຕະປື ມີບາງວັດກໍ່ມີອາຍຸຮອດ 400 ກວ່າປີ ເຊັ່ນ : ວັດຫລວງ, ວັດທາດ, ວັດສະແຄະ ຫລື ວັດໂພນງາມ.

ເມືອງໄຊເຊດຖາປະຈຸບັນແມ່ນນຶ່ງໃນບັນດາວັດທີ່ມີແຂກພາຍໃນ ແລະ ຕ່າງແຂວງໃຫ້ຄວາມສຳຄັນ ເປັນບ່ອນສັກກາລະບູຊາຕະຫລອດມາ. ຜ່ານເວລາດົນນານບວກກັບສົງຄາມຮຸກຮານ ວັດວາອາຣາມພາຍໃນແຂວງ ເປັນຕົ້ນເມືອງໄຊເຊດຖາ, ເມືອງສາມັກຄີໄຊ, ເມືອງສະໜາມໄຊ ໄດ້ຊຸດໂຊມ, ພັງທະລາຍເສຍຮູບຊົງເດີມເຫລືອແຕ່ຮ່ອງຮອຍທີ່ສະຫລັກຫັກພັງ ແຕ່ຍ້ອນຄວາມເຫລື້ອມໃສທາງພຸດທະສາສະໜາຂອງປະຊາຊົນບັນດາເຜົ່າ ຈຶ່ງສາມັກຄີກັນປະຕິສັງຂອນວັດທີ່ຊຸດໂຊມໃຫ້ຄືນສູ່ສະພາບປົກກະຕິ.

**ທ່ານ ສີນພອນ**

ເຈົ້າເມືອງ ໄຊເຊດຖາ



ການເຂົ້າຮ່ວມກອງປະຊຸມຄັ້ງນີ້ມີຄວາມສຳຄັນ ເພາະວ່າຜ່ານມາບໍ່ມີການເປີດກອງປະຊຸມຄືຄັ້ງນີ້ ກອງປະຊຸມຄົ້ນຄວ້າກ່ຽວກັບໜັງສືໃບລານ ເຮັດໃຫ້ຟື້ນຟູວັດທະນະທຳຄືນມາໃໝ່ ແລະ ປົກປັກຮັກສາໃນຕໍ່ໜ້າ. ສະນັ້ນ ເພື່ອເຮັດໃຫ້ທຸກຄົນມີສ່ວນຮ່ວມນຳ ຕ້ອງໄດ້ສຶກສາອົບຮົມໂຄສະນາປະຊາຊົນໃຫ້ເຂົ້າໃຈຈັດຕັ້ງໃຫ້ທຸກຄົນໄດ້ປະກອບສ່ວນນຳ ຢ່າງຕັ້ງໜ້າ.



## ທ່ານ ທອງພັນ ຈີນມະວົງ

ວັດທະນະທຳ ເມືອງສະໜາມໄຊ.

ວຽກງານວັດທະນະທຳແມ່ນວຽກງານນຶ່ງ ເຊິ່ງເປັນສິ່ງປະທັບໃຈຂອງຊາວເມືອງສະໜາມໄຊ. ເວົ້າເຖິງການປຸກລະດົມການບູລະນະສ້າງສາວັດວາ ຫລາຍຄົນເຂົ້າໃຈດີ ແລະ ປະຕິບັດໄດ້ດີພໍສົມຄວນໃນໄລຍະຜ່ານມາ ເພື່ອໃຫ້ໄດ້ດີກວ່ານີ້ຕໍ່ໄປຈະໄດ້ຈັດຕັ້ງປຸກລະດົມກັນຕື່ມອີກ ນັບແຕ່ອົງການຈັດຕັ້ງຂັ້ນຮາກຖານຮອດຂັ້ນ ພັກ-ລັດ ຢູ່ໃນທຸກຂົງເຂດວຽກງານ. ຈັດຕັ້ງເຕົ້າໂຮມຜູ້ຊົງຄຸນວຸດທິພະສົງ ສືບຕໍ່ກວດກາໜັງສືໃບລານໃຫ້ເປັນຜູກເປັນມັດ ແລະ ໃຫ້ຢູ່ໃນສະພາບດີ.

ອ່ານຕໍ່ໜ້າ 9

# ວຽກສຳຫລວດ ທີ່ອັດຕະປື

ແຂວງອັດຕະປື ເປັນດິນແດນທີ່ອຸດົມສົມບູນ ແລະ ຮາບພຽງກ້ຽງງາມດີສົມຄວນ ປະຊາຊົນມີຮີດຄອງອັນດີງາມມາແຕ່ດົນນານ ສ່ວນຫລາຍນັບຖືສາສະໜາພຸດ ອາຊີບກໍແມ່ນເຮັດນາ, ເຮັດສວນ ແລະ ປູກຜັກ, ຊີວິດການເປັນຢູ່ຮຽບງ່າຍ ຊຶ່ນປາອາຫານຍັງອຸດົມຮັ່ງມີ ສັງຄົມວັດທະນະທຳຍັງຈົບງາມ ບໍ່ທັນຖືກກະທົບຈາກເສດຖະກິດພາຍນອກທໍ່ໃດ. ນັບແຕ່ຕົ້ນເດືອນ 9 ປີ 1998 ເຖິງກາງເດືອນ 10 ປີ 1998 ໜ່ວຍສຳຫລວດໜັງສືໃບລານ ໄດ້ເຄື່ອນໄຫວປົກປັກຮັກສາໜັງສືໃບລານຢູ່ແຂວງ ອັດຕະປືໃນຈຳນວນ 16 ບ້ານ ສາມາດຂຶ້ນບັນຊີ ແລະ ປົກປັກຮັກສາໄດ້ 4,806 ຜູກ. 992 ເລື່ອງ, ຢູ່ໃນສາມຕົວເມືອງຄື: ເມືອງໄຊເຊດຖາ, ເມືອງສະໜາມໄຊ ແລະ ເມືອງສາມັກຄີໄຊ. ການເຄື່ອນໄຫວຢູ່ສາມເມືອງນີ້ ມີປະຊາຊົນເຂົ້າຮ່ວມວຽກງານອະນາໄມໃບລານ 780 ຄົນ, ພະສົງສາມະເນນ ➡





ປະຊາຊົນເຂົ້າຮ່ວມຟັງລາຍງານສະຫລຸບຢູ່ ວັດໄພໄຊ ແຂວງອັດຕະປື

148 ອົງ. ສະແດງເຖິງນ້ຳໃຈ ແລະ ຄວາມຕື່ນຕົວເປັນພະລັງແຫ່ງຄວາມສາມັກຄີ ຂອງປະຊາຊົນແຂວງອັດຕະປື, ຍາມໃດກໍ່ມີຄວາມຈົງຮັກພັກດີຕໍ່ວັດທະນະທຳຂອງຕົນຢູ່ສະເໝີ. ໂດຍສະເພາະແມ່ນ ເມືອງໄຊເຊດຖາ ເປັນເມືອງທີ່ມີຊື່ສຽງທາງປະຫວັດສາດ. ການສຳຫລວດໃນຈຳນວນ10 ວັດ ປະຊາຊົນກໍ່ໄດ້ມີການຫ້າງຫາກະກຽມໄວ້ກ່ອນໜ່ວຍສຳຫລວດຈະໄປຮອດ ເຂົາເຈົ້າມີຄວາມຄອງຄອຍ ຕັ້ງແຕ່ນີ້ ຫົວໜ້າວັດທະນະທຳເມືອງເພິ່ນໄດ້ປະກາດໃຫ້ປະຊາຊົນຮູ້ໄວ້ກ່ອນໜ້າດົນແລ້ວ ດັ່ງນັ້ນເມື່ອໜ່ວຍສຳຫລວດພວກເຮົາໄປຮອດ ຈຶ່ງໄດ້ມີການຕ້ອນຮັບດ້ວຍຄວາມຍິນດີ ແລະ ເຂົ້າຮ່ວມເຮັດວຽກນຳດ້ວຍຄວາມພໍອົກພໍໃຈ. ປະຊາຊົນສ່ວນຫລາຍມີຄຳຖາມກ່ຽວກັບວັດວາສາສະໜາ ຫົວໜ້າໜ່ວຍ ( ທ່ານ ມະຫາ ບຸນຍົກ) ກໍໄດ້ຕອບຂໍ້ຂ້ອງໃຈ ແລະ ອະທິບາຍກ່ຽວກັບຄວາມເປັນມາຂອງໂຄງການໃບລານ ສະແດງເຖິງຄວາມເປັນຫວ່ງເປັນໄຍຂອງພັກ ແລະ ລັດເຮົາຕໍ່ວຽກງານປົກປັກຮັກສາມູນມໍລະດົກວັດທະນະທຳ, ຜົນສຳເລັດໃນຄັ້ງນີ້ ກໍ່ຍ້ອນຄວາມເຂົ້າອົກເຂົ້າໃຈຂອງພະສົງສາມະເນນ ແລະ ພໍ່ແມ່ປະຊາຊົນ ໂດຍສະເພາະແມ່ນທ່ານຂັນທອງ ຫົວໜ້າພະແນກວັດທະນະທຳແຂວງ ແລະ ທ່ານຂຽນ ຫົວໜ້າວັດທະນະທຳເມືອງໄຊເຊດຖາ ເພິ່ນໄດ້ປະສານງານກັບອຳນາດການປົກຄອງແຕ່ລະບ່ອນໄດ້ເປັນຢ່າງດີ ພວກເຮົາໄດ້ຮັບຄວາມຊົມເຊີຍຈາກເຖົ້າແກ່ແນວໂຮມວ່າ: *ໂຄງການນີ້ເຮັດແທ້ທຳຈິງ ກ້າຮັກສາໜັງສືໃບລານຄືແນວນີ້ສາສະໜາກໍ່ຍັງຢູ່.* ເປັນຄຳເວົ້າທີ່ພວກເຮົາກໍ່ຕື້ນຕັນໃຈ ໃນຄວາມເປັນຫວ່ງເປັນໄຍຂອງພໍ່ແມ່ປະຊາຊົນ ເຊື່ອວ່າ ໜັງສືໃບລານຢູ່ແຂວງອັດຕະປືຈະໄດ້ຮັບໃຊ້ສັງຄົມ ແລະ ຢູ່ຄູ່ກັບຊາວອັດຕະປືຕະລອດໄປ.



ຊາວບ້ານ ພວມສາມັກຄີກັນອະນາໄມໃບລານຢູ່ວັດຫຼວງ ເມືອງສາມັກຄີໄຊ ແຂວງອັດຕະປື

ຕໍ່ຈາກໜ້າ 7

## ບົດປະກອບສຳເຫັນ



### ທ່ານ ຄຳຂຽນ

ຫົວໜ້າວັດທະນະທຳເມືອງສາມັກຄີໄຊ.

ຜ່ານການເຂົ້າຮ່ວມກອງປະຊຸມ ເຫັນວ່າ ພາລະບົດບາດຂອງກອງປະຊຸມນີ້ ມັນເຢືອງທາງເຖິງຄວາມສຳຄັນຫລາຍອັນ. ຕົວຂ້າພະເຈົ້າເອງ ແມ່ນໄດ້ຮັບຮູ້ ແລະ ຈະນຳເອົາບົດຮຽນນີ້ໄປຜັນຂະຫຍາຍ. ບັນຫາທີ່ສົນໃຈ ແລະ ຢາກ ນຳໄປຂະຫຍາຍນັ້ນ ແມ່ນການພັດທະນາວັດວາອາຮາມ ທີ່ຍັງບໍ່ທັນສົມບູນ ແລະ ບໍ່ໄດ້ປະຕິສັງຂອນໃໝ່ ສະນັ້ນຈະ ໄດ້ນຳເອົາເນື້ອໃນຂອງກອງປະຊຸມນີ້ໄປຜັນຂະຫຍາຍ ໂດຍສົມທົບກັບອຳນາດການປົກຄອງທີ່ມີສ່ວນກ່ຽວຂ້ອງ ພ້ອມກັນ ປຸກລະດົມປະຊາຊົນສ້າງສາພັດທະນາວັດວາອາຮາມກໍ່ຄືໜັງສືໃບລານ. ໃຫ້ປະຊາຊົນໄດ້ຮັບຮູ້ບົດບາດຄວາມສຳຄັນ ຂອງສາສະໜາ ແລະ ວັດວາອາຮາມ ໄດ້ຮ່ວມກັນປະຕິບັດເປັນແຕ່ລະບາດກ້າວໄປ.



### ທ່ານ ມິດກຸາ ຕິ່ງແກ້ວ

ແນວໂຮມ ເມືອງ ສາມັກຄີໄຊ

ການສຳມະນາກ່ຽວກັບໜັງສືໃບລານຄັ້ງນີ້ເປັນການດີ ເພື່ອປົກປັກຮັກສາມໍລະດົກວັດທະນະທຳ ໃຫ້ລູກຫລານໄດ້ຮ່ຳຮຽນ ເຫັນໄດ້ວ່າໜັງສືໃບລານນີ້ມາແຕ່ໃສ. ແຕ່ສະໄໝບູຮານມາເຖິງປະຈຸບັນເປັນແນວໃດ. ສະນັ້ນໃນນາມແນວໂຮມຜູ້ນຶ່ງທີ່ໄດ້ມາຮ່ວມກອງປະຊຸມນີ້ ຈະນຳເອົາເນື້ອໃນໄປເຜີຍແຜ່ ກະຕຸກຊຸກຍູ້ພໍ່ແມ່ປະຊາຊົນ ຮ່ວມກັບຄະນະບ້ານ ເຮັດໃຫ້ປະຊາຊົນເຫັນແຈ້ງໃນສາສະໜາ ວັດທະນະທຳເກົ່າແກ່. ແຕ່ບູຮານະການ ຮູ້ໄດ້ວ່າເຮົາເປັນ ຊາດທີ່ມີສາສະໜາພຸດເປັນຫລັກ. ສະນັ້ນເມື່ອເຖິງເວລາທີ່ທາງຄະນະຮັບຜິດຊອບລົງມາປະຕິບັດຕົວຈິງ ກໍ່ຈະໃຫ້ການ ຮ່ວມໄມ້ຮ່ວມມືພ້ອມກັບປະຊາຊົນໂດຍກໍ່ເປັນກຽດວ່າ: ທາງຄະນະຮັບຜິດຊອບໜັງສືໃບລານແມ່ນຈິງໃຈ ແລະ ຊອກຫາ ຄຸນຄ່າມູນມໍລະດົກຂອງຊາດເພື່ອຜົນປະໂຫຍດຮວມຕໍ່ໄປ.



## ທ່ານ ທອງຈັນ ຈັນທະມາດ

ຮອງເຈົ້າເມືອງງຸ່ມປຶງ

ການເຂົ້າຮ່ວມກອງປະຊຸມຊຸດນີ້ ມີຄວາມເຂົ້າໃຈຢູ່ຫລາຍບັນຫາຄື : ກອງປະຊຸມວັດທະນະທຳເປັນກອງປະຊຸມ ທີ່ເວົ້າເຖິງການສະຫນອງທາງຈິດໃຈ. ຫນັງສືໃບລານເປັນມູນມໍລະດົກອັນລ້ຳຄ່າຂອງຊາດ ສ່ອງແສງເຖິງວ່າໄລຍະຜ່ານມາລາວມີຮີດຄອງປະເພນີອັນດີງາມ. ຫນັງສືໃບລານອາດກາຍເປັນຂໍ້ມູນໃຫ້ຄົ້ນຄວ້າ ໃນອະນາຄົດ ອາດມີຫລາຍຕຳລາທີ່ຖືກຕ້ອງຕາມພຶດຕິກຳເງື່ອນໄຂຕົວຈິງຂອງລາວ ຮູ້ໄດ້ຄຸນປະໂຫຍດຂອງຫນັງສືໃບລານແລ້ວພ້ອມກັບປົກປັກຮັກສາໃນອະນາຄົດ. ຜ່ານການສຳມະນາແລ້ວຈະນຳເອົາເນື້ອໃນຈິດໃຈໄປຜັນຂະຫຍາຍເຮັດໃຫ້ທຸກຄົນເຂົ້າໃຈ. ໃຫ້ຄົນຮຸ່ນໃຫມ່ຮູ້ຄວາມຫມາຍຄວາມສຳຄັນຂອງຫນັງສືໃບລານ. ເມື່ອຫນ່ວຍສຳຫລວດຕົວຈິງລົງມາຮອດ ຈະປຸກລະດົມປະຊາຊົນ, ພະສົງ, ແນວໂຮມໄດ້ຮ່ວມມືກັນເຮັດໃຫ້ຫນ່ວຍງານນີ້ມີຄວາມສະດວກໃນການປະຕິບັດວຽກງານໃຫ້ມີປະສິດທິຜົນ.

## ທ່ານ ອິນຄຳ ທະວີວັນ

ຮອງເຈົ້າເມືອງສາມັກຄີໄຊ



ຜ່ານການເຂົ້າຮ່ວມກອງປະຊຸມຄັ້ງນີ້ ເຫັນວ່າ: ກອງປະຊຸມມີຄວາມຫມາຍສຳຄັນໃນການປົກປັກຮັກສາຫນັງສືໃບລານ ເຊິ່ງໄລຍະຜ່ານມາໃນສະໄຫມສົງຄາມທຳລາຍ ບາງວັດຢູ່ເມືອງສາມັກຄີໄຊກໍ່ກາຍເປັນວັດຮ້າງ. ການສົ່ງເສີມການອະນຸລັກແມ່ນຫຍຸ້ງຍາກ ປະຊາຊົນແຕກຕື່ນເຂົ້າປ່າເຂົ້າດົງປະຮ້າງວັດວາສາສະຫນາໄປ. ມາເຖິງປະຈຸບັນນີ້ ກໍ່ຍັງມີບ້ານຈຳນວນນຶ່ງທີ່ຍັງບໍ່ທັນມີວັດ ເຖິງຢ່າງໃດກໍ່ຕາມ ຜ່ານການບູລະນະ ແລະ ປົກປັກຮັກສາ ໃນໄລຍະຜ່ານມາ ເມືອງສາມັກຄີໄຊ ກໍ່ເປັນເມືອງນຶ່ງທີ່ໄດ້ເອົາໃຈໃສ່ບູລະນະ ແລະ ປະຕິສັງຂອນວັດວາອາຮາມຄືນໃຫມ່ ທັງໃນເມືອງ ແລະ ແຕ່ລະບ້ານເຮັດໃຫ້ການອະນຸລັກຮັກສາຫນັງສືໃບລານດີຂຶ້ນແຕ່ລະກ້າວ. ພາຍຫລັງທີ່ສຳເລັດກອງປະຊຸມນີ້ແລ້ວ ໃນນາມຄະນະນຳຜູ້ນຶ່ງ ຈະສຸມທຸກກຳລັງແຮງສົມທົບກັບອຳນາດການປົກຄອງທ້ອງຖິ່ນ ອົງການຈັດຕັ້ງແນວໂຮມ, ປະຊາຊົນແຕ່ລະ ບ້ານພ້ອມພະສົງສາມະເນນແຕ່ລະວັດ ຈະຟື້ນຟູຄືນໃຫມ່ ດຳເນີນການກວດກາຄືນ ກ່ຽວກັບການເກັບກຳ ຂໍ້ມູນຫນັງສືໃບລານຢູ່ແຕ່ລະວັດໄປຄຽງຄູ່ກັບການປົກປັກຮັກສາ ແລ້ວຈະຊຸກຍູ້ພະສົງ ຈັດຕັ້ງກັນຄົ້ນຄວ້າຮ່ຳຮຽນຄືນ ທັງນີ້ ກໍ່ເພື່ອເປັນການອະນຸລັກມູນເຊື້ອວັດທະນະທຳອັນດີງາມຂອງຊາດ. ອີກປະການນຶ່ງ ຂ້າພະເຈົ້າຄິດວ່າ ຈະປຸກລະດົມໃຫ້ປະຊາຊົນຮັບຮູ້ບົດບາດແລະຄວາມສຳຄັນຂອງຫນັງສືໃບລານ. ຫນັງສືໃບລານມັນແມ່ນຄັງວັດຖຸ ຫລືວ່າແມ່ນການປົກປັກຮັກສາສະຕິປັນຍາຄວາມຮູ້ຂອງຄົນຂອງບັນພະບຸລຸດບໍ່ໃຫ້ເສຍຫາຍໄປ ຄວາມຮູ້ນັ້ນເປັນການ ສັ່ງສອນໃຫ້ປະຊາຊົນຮູ້ອັນຄວນ ແລະ ບໍ່ຄວນ.

# ມອບທຶນການສຶກສາ



ທຸກໆປີທີ່ຜ່ານມາ ໂຄງການປົກປັກຮັກສາໜັງສືໃບລານລາວ ໄດ້ນຳໃຊ້ທຶນຊ່ວຍເຫລືອທີ່ໄດ້ຮັບຈາກລັດຖະບານເຢຍຣະມັນນັ້ນເພື່ອຊຸກຍູ້ທຶນການສຶກສາສົງໃຫ້ແຕ່ລະແຂວງ ໃນການສຶກສາກ່ຽວກັບພະພຸດ ທະສາສນາພາສາບາລີ ແລະ ພາສາວັນນະຄະດີລາວໃຫ້ເລິກເຊິ່ງ ເປັນການກໍ່ສ້າງຊັບພະຍາກອນຝ່າຍພະສົງອັນມີດທະຍົມສຶກສາໃນທົ່ວປະເທດ. ສະເພາະປີນີ້ ທາງໂຄງການໄດ້ຂະຫຍາຍການຮ່ວມມືດ້ານວິຊາການໄປຍັງມະຫາວິທະຍາໄລແຫ່ງຊາດ ໃນຈຸດປະສົງອັນດຽວກັນ ຄື: ກໍ່ສ້າງຊັບພະຍາກອນມະນຸດໃນພາກວິຊາພາສາລາວ-ວັນນະຄະດີ.

ດັ່ງໃນວັນທີ 8 ເມສາ 1999 ເວລາບ່າຍ 2 ໂມງຢູ່ທີ່ຫ້ອງຮັບແຂກມະຫາວິທະຍາໄລແຫ່ງຊາດ (ດົງໂດກ) ໄດ້ມີພິທີມອບທຶນອຸດໜູນການສຶກສາໃຫ້ແກ່ພະແນກພາສາລາວ-ວັນນະຄະດີປີທີສາມ ສະເພາະສົກສຶກສາ 98-99 ໃນຈຳນວນເງິນ **14.000.000 ກີບ ( ສິບສີ່ລ້ານກີບ )** ທຶນດັ່ງກ່າວແມ່ນທາງໂຄງການປົກປັກຮັກສາໜັງສືໃບລານລາວ (ການຮ່ວມມື ລາວ - ເຢຍຣະມັນ) ໂດຍມີ **ທ່ານນາງກິ່ງເດືອນ ເນດຕະວົງ** ຜູ້ອຳນວຍການຫໍສະໝຸດແຫ່ງຊາດ ທັງເປັນຫົວໜ້າໂຄງການ ເປັນຜູ້ກ່າວມອບ. **ທ່ານ ລາມໄມ ພີພັກອະວົງ** ຮອງອະທິການບໍດີມະຫາວິທະຍາໄລແຫ່ງຊາດເປັນຜູ້ກ່າວຮັບ. ເປັນສັກຂີພະຍານໃນການ ມອບ-ຮັບ ຄັ້ງນີ້ຍັງມີທ່ານ **ອຸລຣິສ ດຣີເຊນ** ເອກອັກຄະລັດຖະທູດວິສາມັນ ຜູ້ມີອຳນາດເຕັມແຫ່ງ ສ.ສ.ເຢຍຣະມັນປະຈຳລາວ ທີ່ວຽງຈັນ ທ່ານ ສາສະດາຈານ **ດຣ. ຣະຮັນ ຣຸນດີອຸສ** ຊ່ຽວຊານປະຈຳໂຄງການປົກປັກຮັກສາໜັງສືໃບລານລາວ ແລະ ບັນດາຄູອາຈານພ້ອມດ້ວຍນັກສຶກສາເຂົ້າຮ່ວມນຳ. ເພື່ອເປັນການຍັ້ງຢືນ ແລະ ສະແດງຄວາມຂອບໃຈ ມະຫາວິທະຍາໄລແຫ່ງຊາດຍັງໄດ້***ມອບໃບຍ້ອງຍໍ ໃຫ້ກັບໂຄງການນຳອີກດ້ວຍ.***

## ທ່ານ ກຸາວອນ

ຫົວໜ້າພະແນກສຶກສາ ແຂວງ ອັດຕະປື



ການຈັດສຳມະນາການປົກປັກຮັກສາໜັງສືໃບລານລາວ ຂຶ້ນຢູ່ແຂວງອັດຕະປືນີ້ ແມ່ນເປັນການດີທີ່ສຸດ ເພາະຢູ່ໃນໄລຍະຜ່ານມາ ມູນມໍລະດົກທາງວັດທະນະທຳແມ່ນນັບມື້ຫລຸດໜ້ອຍລົງ. ສະນັ້ນເມື່ອມີໂຄງການນີ້ມາຈຶ່ງເຮັດໃຫ້ບັນຫານີ້ຟື້ນຕົວຂຶ້ນ. ກໍວ່າວັດທະນະທຳມູນມໍລະດົກອັນເກົ່າແກ່ຂອງລາວມີຄວາມສຳຄັນທີ່ສຸດ ກ້າວ່າເຮົາບໍ່ຟື້ນຄືນມາຄືນຮຸ່ນໃໝ່ຈະບໍ່ເຫັນໄດ້ມູນເຊື້ອ ກໍ່ຄືຜົນງານທີ່ບັນພະບຸລຸດລາວສ້າງໄວ້ ໂດຍສະເພາະມັນໄດ້ສະແດງອອກຢູ່ພື້ນຖານບູຮານວັດຖຸນຳວັນນະຄະດີໜັງສືໃບລານຢັ້ງຢືນເຖິງປະຫວັດສາດທີ່ຍາວນານຂອງຊາດລາວ ສະນັ້ນໃນໂອກາດ ທີ່ໄດ້ມາຮ່ວມກອງປະຊຸມນີ້ກໍ່ຂໍສະແດງຄວາມພູມໃຈທີ່ໄດ້ເຫັນຄວາມຫ່ວງໄຍຂອງຂັ້ນເທິງ ກໍ່ຄື ລັດຖະບານໄດ້ຟື້ນຟູບັນຫານີ້ຂຶ້ນ

ອ່ານຕໍ່ໜ້າ 23

# ຫລານສອນຢ່າ

*ໜັງສືໃບລານ ສົມເດັດ ສຸບັນ. ວັດປທຸມປີບົມ ນາລຸງເໜືອ*
*( ຖອດຄວາມໂດຍ ມະຫາບຸນເລີດ ທຳມະຈັກ )*

ບັດນີ້ຂ້າຈັກກົ້ມກາບໄຫວ້ ປະນົມນອບນາໂກ
ທັງທັມໂມ ໝູ່ພະສົງຄຸນແກ້ວ
ກັບທັງຝູງຄົນເກົ້າ ຄູບາພໍ່ແມ່
ຄຸນມະຫາຣາດເຈົ້າ ທີ່ເຮົາໄດ້ເພິ່ງພາ ທ່ຽວທ້ອນ
ບັດນີ້ເຮົາຈັກໄດ້ກ່າວແກ້ ສນອງບາດບຸນຄຸນ ກ່ອນແລ້ວ
ຂໍໃຫ້ເປັນປານີ ຢູ່ເຢັນຫາຍຮ້ອນ
ຄັນຫລານໄຂຄຳເວົ້າ ເຄືອງຫູເກົ້າຢ່າ
ຢ່າໄດ້ເຈັບປວດຊ້ຳ ຄຳນັ້ນຢ່າກໍ ຫລານທ້ອນ
ຄັນແມ່ນຄວາມຫລານເວົ້າ ຂົມໃນຢ່າພ້າວຈົ່ມ ຢ່າເອີຍ
ລາງເທື່ອຂົມຂີ້ເພ້ຍ ເມືອໜ້າຫາກຊິບົວ ດອກນາ
ຢ່າໄດ້ຕິຕຽນເວົ້າ ຜັກກະເດົາຂົມຂື່ນ
ລາງເທື່ອກັບລາບກ້ອຍ ຊິຫລົງຮ້ອງວ່າຫລານ ບໍ່ຢ່າແລ້ວ
ຄັນວ່າຫລານຈາຕ້ານ ເຕັມປານປາແດກອື່ງ
ຢ່າໄດ້ຕິໂທດທ້ວງ ໃຫ້ດຶງສ້ວງເບິ່ງໄຂຫລັງ ຢ່າເອີຍ
ລາງເທື່ອຄຳໃດຂວາງຂັດຂໍ້ ຄາຄໍອັ້ນຈໍຫລໍ່ ໄປນັ້ນ
ໃຫ້ຢ່າເບີດເທົ້ເສົ້ ແລ້ວເອົານ້ຳລ່ອງລົງ ທັ້ນທ້ອນ
ເພິ່ນວ່າແນວຄົນເກົ້າ ຫາກໃຈເບົາຄຽດງ່າຍ ຈິງລື !
ໃຈດີທໍ່ໝາກຝ້າຍ ໃຈຮ້າຍທໍ່ໝາກຕູມ ບໍ່ຢ່າແລ້ວ
ຄັນແມ່ນແນວຄົນເກົ້າ ຢ່າຫູເບົາເອົາຄວາມງ່າຍ ບໍ່ດີເນີ
ໃຫ້ໃຈດີທໍ່ໝາກພ້າວ ໃຫ້ໃຈຮ້າຍທໍ່ໝາກຕູມ ທັ້ນທ້ອນ
ລາງເກົ້າຟູມໆປ້ອຍ ກາງຄືນເອີ້ນ ຫາຮ່າ
ຫາແຕ່ຄວາມຂີ້ໃຮ້ ມາໃຫ້ລູກຫລານ ກໍມີ
ລາງເກົ້າຟູມໆຮ້າຍ ສຽງຂັນແຕ່ກ່ອນໄກ່
ທັງດ່ອງຈົ່ມດ່ອງຮ້າຍ ຈາປ້ອຍລູກຫລານ ກໍມີ
ລາງເກົ້າພາງານພົ້ນ ພາໄລເວົ້າລ່າຍ

ກິນຫລາຍກໍດ່າປ້ອຍ
ຍັງຮ່າວເປັນຄົນເກົ້າ
ທີ່ແຕ່ໄປຄວ່າເວົ້າ
ລາງເກົ້າຜູ້ຍິງນັ້ນກໍທໍ່ທັນໆເຂົ້າ
ເຂົາຊໍ້າເວົ້າເຍາະເຍີ້ຍ
ຄັນວ່າເປັນຄົນເກົ້າ
ບໍ່ຄະລໍາວາຈາ
ເຂົາຊິນິນທາຫ້ວງ
ເຂົາຊິວ່າ! ເກົ້າແກ່ແດດ
ເກົ້າແກ່ລົມ
ເກົ້າຄາງວໍ້າ
ເຂົາບໍ່ຢາແຍງຂາມ
ຍ້ອນວ່າແນວຄົນເກົ້າ
ມີທັງເກົ້າຂີ້ຮ້າຍ
ຫລານນີ້ບໍ່ຢາກຈາຫລາຍຂໍ້
ຢ້ານຜູ້ເກົ້າຂີ້ຮ້າຍ

ກິນໜ້ອຍກໍວ່າເວນ
ທິວຂາວດາຍເປົ່າ
ສາວນ້ອຍຢອກໄຢ ກໍມີ
ຫຍັບທາແຕ່ພວກບ່າວ
ກໍລືມເຊື້ອຊາດໂຕ.
ບໍ່ເຂົ້າວັດຟັງທໍາ
ຢອກໄຢແຕ່ສາວນ້ອຍ
ຕີຕຽນທັງໂລກ ເສຍແລ້ວ
ບໍ່ຫລຽວເບິ່ງທາງຕີນ
ບໍ່ຫລຽວເບິ່ງທາງນໍ້າ
ບໍ່ຮູ້ຮ່ອມທາງທໍາ ວ່ານີ
ທີ່ໃຍຍອງໜ້ອຍ
ມີຫລາຍເຫຼືອມາກ
ຫລາຍເຊື້ອຕ່າງຊຸມ ຢ່າເຮີຍ
ຊິຂໍເຊົາສາກ່ອນ
ຊິບາຍຄ້ອນໃສ່ຫົວ ບໍ່ຢ່າແລ້ວ



# ບໍລິຄຳໄຊໃຈເຖິງ

ໂດຍ : ຄຳສິງ ວົງສະຫວ່າງ

ໃນລະຫວ່າງວັນທີ 26/4 ເຖິງ 5/5/1999 ນີ້ຄະນະວິຊາການໂຄງການໃບລານໄດ້ມີໂອກາດ ໄປຕິດຕາມການປົກປັກຮັກສາໜັງສືໃບລານໃນເບື້ອງຕົ້ນຂອງພະແນກກະແຫລງຂ່າວ ແລະ ວັດທະນະທຳແຂວງບໍລິຄຳໄຊ. ແຂວງນີ້ປະກອບດ້ວຍ 6 ຕົວເມືອງ ແຕ່ລະເມືອງກໍ່ມີວັດວາສາສະໜາທຸກໆເມືອງ. ໜັງສືຜູກໃບລານຢູ່ແຕ່ລະວັດກໍ່ມີຫລາຍໜ້ອຍ ແຕກຕ່າງກັນ.ບາງບ່ອນກໍ່ຢູ່ກະແຈກກະ ຈາຍບໍ່ເປັນລະບຽບ ມີສະພາບຊຸດໂຊມ. ເຮັດໃຫ້ຄວາມເປັນຫ່ວງ ເປັນໄຍຂອງພະແນກກະແຫລງຂ່າວ ແລະ ວັດທະນະທຳແຂວງຕ້ອງໄດ້ເອົາໃຈໃສ່ ແລະ ຮີບຮ້ອນປົກປັກຮັກສາ ໃນເບື້ອງຕົ້ນ. ແຕ່ກໍ່ສາມາດເຮັດໄດ້ສ່ວນໃດສ່ວນໜຶ່ງເທົ່ານັ້ນ. ຍ້ອນວ່າລຳພັງທຶນຮອນຂອງພະແນກເອງກໍ່ບໍ່ສາມາດເຮັດໄດ້ໝົດໃນທຸກບ່ອນ. ແຕ່ຄວາມພະຍາຍາມຂອງອ້າຍນ້ອງພະນັກງານຢູ່ໃນຂະແໜງວັດທະນະທຳກໍ່ໄດ້ບຸກບືນເພື່ອລະເລັກ-ລະນ້ອຍຕາມຄວາມສາມາດເພື່ອກອບກູ້ ແລະ ປົກປັກຮັກສາມໍລະດົກວັດທະນະທຳອັນນີ້. ທັງອອກແຮງປຸກລະດົມໃນທົ່ວປວງຊົນໃຫ້ຮູ້ຮັກວັດທະນະທຳຂອງຊາດໂດຍສະເພາະພະສົງອົງຄະເຈົ້າ. ໜັງສືໃບລານບາງວັດ ກໍ່ໄດ້ຖືກນຳໃຊ້ຢູ່ເປັນປະຈຳ ທັງຢູ່ໃນສະພາບດີ ແລະ ຮັບປະກັນເຊັ່ນ: ວັດທາດຊຽງຕອມ ເມືອງບໍລິຄັນ, ວັດປາກປຶງ ເມືອງປາກຊັນ, ວັດປາກກະດິງເໜືອ. ພິເສດ ພະອາຈານປັນ ເຈົ້າອະທິການວັດປາກກະດິງເໜືອ ທັງເປັນປະທານ ອ.ພ.ສ ເມືອງປາກກະດິງ, ເພິ່ນຍັງຈານ(ຂຽນ)ໜັງສືເປັນປະຈຳ, ທັງກໍ່ສ້າງຫໍໄຕຕຶກກັບຫໍກອງໃກ້ຈະສຳເລັດແລ້ວ. ມີແຜນການສ້າງພະໄຕປິດົກໃສ່ໃບລານ, ມີອອກຕົບຍາດໂຍມໃຫ້ການສະໜັບສະໜູນຫລາຍ. ພະອາຈານເວົ້າວ່າ "ສະເພາະ ອັດຕະມາຈານ (ຂຽນ) ເອງກໍ່ບໍ່ສາມາດເຮັດແລ້ວ, ຈະມີແຜນການຈ້າງຜູ້ຈານ (ຂຽນ)ເປັນ ຂຽນຊ່ວຍໃນລະພັນກິບ".

ອ່ານຕໍ່ໜ້າ 24



ພະອາຈານ ປັນ ເຈົ້າອະທິການວັດ ປາກກະດິງເໜືອກຳລັງເອົາໃຈໃສ່ຈານໃບລານ



ພະນັກງານ ຖ/ວ ແຂວງ ກຳລັງສາທິດວິທີຂະນາບໃບລານ

# ເມືອງບໍລິຄັນ (ເມືອງເກົ່າ)

ເມືອງບໍລິຄັນຫລືເມືອງເກົ່າ ແຂວງບໍລິຄຳໄຊເປັນເມືອງທີ່ເກົ່າແກ່ສົມຊື່ ມີຮ່ອງຮອຍປະຫວັດສາດ ແຕ່ບໍ່ມີປະຫວັດຂຽນໄວ້ ກ່ອນເຜົ່າພວນຈະລົງມາຢູ່. ເມືອງນີ້ຄົງຈະມີບ້ານເຮືອນ ຫລື ຜູ້ຄົນໄດ້ຕັ້ງກິ່ນຖານມາກ່ອນແລ້ວ. ເພາະວ່າຍັງເຫັນມີຊາກສະຫລັກຫັກພັງຂອງວັດເກົ່າແກ່ ບໍ່ມີໃຜຮູ້ ແຕ່ເທົ່າທີ່ມີຄົນຮູ້ກໍ່ພຽງແຕ່ສະໄໝເຜົ່າພວນຍົກຍ້າຍມາແຕ່ຊຽງຂວາງນີ້ ດັ່ງທີ່ທ່ານ ພໍ່ເຖົ້າ ຈັນທະດົມ ອາຍຸ 69 ປີ. ຢູ່ບ້ານເມືອງເກົ່ານີ້ເລົ່າໃຫ້ຟັງວ່າ: "ເມື່ອເຈົ້ານ້ອຍເມືອງພວນຖືກເສຍຊີວິດລົງ ບັນດາເຊື້ອສາຍຂອງເຈົ້າເມືອງພວນ ກໍ່ຍາດແຍ່ງກັນຂຶ້ນກຳອຳນາດ ເປັນເຈົ້າຊີວິດພາຍໃຕ້ຫົວເມືອງຂຶ້ນຂອງສະຫຍາມຄື: ລູກຂອງເຈົ້າໂກ້ ແລະ ເຈົ້າອຶ່ງ ເຈົ້າບຸນຄົງ, ເຈົ້າດວງດີ ບໍ່ຊະນະ ພວກເຂົາຈຶ່ງໄດ້ອົບພະຍົບ ລົງມາ ພ້ອມດ້ວຍຄອບຄົວເຜົ່າພວນຈຳນວນນຶ່ງ ອີກສ່ວນນຶ່ງກໍ່ຂ້າມໄປຢູ່ຟາກນ້ຳຂອງເບື້ອງນັ້ນ (ບ້ານພັນລຳ) ເວລານັ້ນ ຂຸນເສິກຂອງສະຫຍາມຄື : ເຈົ້າ ຂຸນພົນ ວິໄສ ໄດ້ກຳອຳນາດ ແລະ ປົກຄອງມີນິດໄສຮ້າຍກາດຕໍ່ຄົນລາວຫລາຍ. ເຮັດແນວໃດຈຶ່ງຊິໃຫ້ຄົນລາວເຮົາປົກຄອງກັນເອງ ທັງສາມອ້າຍນ້ອງຈຶ່ງວາງແຜນ ຮອດຂວບຟ້າກາລະດູປີ ຕີທຽນເງິນສີ່, ທຽນຄຳສີ່, ໄປ ຖວາຍເຈົ້າຊີວິດຣາຊະການທີຫ້າຢູ່ໄທ ໄດ້ເຮັດແບບນີ້ ທຸກໆປີ ເຈົ້າຊີວິດໄທເຫັນວ່າຄົນລາວນີ້ດີ ! ເລີຍເອົາເຈົ້າ ຂຸນ ພົນ ວິໄສ ກັບຄືນ, ມອບໃຫ້ຄົນລາວປົກຄອງກັນເອງ, ເຈົ້າເມືອງບໍລິຄັນຜູ້ທີ່ນຶ່ງ ແມ່ນ ເຈົ້າສຸວັນ,ຕໍ່ມາ ເຈົ້າບຸນຄົງ, ຕໍ່ມາ ເຈົ້າດວງດີ ແລະ ເຈົ້າຄຳຮຸ່ງ ເປັນຜູ້ສຸດທ້າຍ ຊຶ່ງແມ່ນລູກຊາຍຂອງ ເຈົ້າດວງດີ ຈາກນັ້ນກໍ່ໝົດເຊື້ອເຈົ້າປົກຄອງ. ຕໍ່ມາໃສ່ເປັງຝຼັ່ງ. ແຕ່ກ່ອນເພິ່ນເອີ້ນວ່າ: ເມືອງພະນ້ຳຮຸ່ງ ຕໍ່ມາຈຶ່ງເອີ້ນວ່າ: (ເມືອງບໍ່ເງິນບໍ່ຄຳ) ຫລື ເມືອງບໍລິຄັນ ຕໍ່ມາ ກໍ່ຍັງມີຄົນປົກຄອງມາອີກໄລຍະນຶ່ງ ຄື: ເຈົ້າເມືອງເຕ້, ເຈົ້າ ເມືອງຕານ, ເຈົ້າ ເມືອງ ກຸ ແລະ ຕໍ່ໃສ່ ທ່ານເຈົ້າ ສຸກ ວົງສັກ, ໄລຍະນັ້ນ ເພິ່ນທັນໄດ້



ທາດເກົ່າແກ່ຢູ່ ວັດທາດ ເມືອງບໍລິຄັນ

ຍ້າຍສຳນັກເມືອງເຂົ້າຢູ່ ປາກຊັນ ແລະ ເມື່ອມີກໍລະນີຂັດແຍ່ງກັບພວກຝຼັ່ງ, ຈຶ່ງໜີເຂົ້າການປະຕິວັດ, ສ່ວນໄທພວນທີ່ລົງມາແຕ່ຊຽງຂວາງ ກໍ່ບໍ່ສະເພາະຢູ່ແຕ່ເມືອງບໍລິຄັນນີ້, ຢູ່ບຶງການ(ຝັ່ງໄທ) ຜຸ້ນກໍ່ຫລາຍ, ຢູ່ບາ ເກາະ, ບາເຫລືອງ ກໍ່ມີ ແຕ່ວ່າ ທາດ ທີ່ເຫັນຢູ່ວັດທາດ ແລະ ວັດນາແຫນນີ້ ແມ່ນທາດຈຸ້ມເຊື້ອພວນພວກເຮົານີ້ ມີອາຍຸກໍ່ປະມານຮ້ອຍກ່ວາປີ".

ອາຊີບຫລັກຂອງປະຊາຊົນກໍ່ແມ່ນເຮັດນາ ມີສາຍນ້ຳຊັນເປັນສາຍນ້ຳທີ່ສຳຄັນ ໃນການຊົມໃຊ້ຫາຢູ່ຫາກິນ ປັດຈຸບັນປະຊາຊົນມີຄວາມກະຕືລືລົ້ນໃນການແລກປ່ຽນສິນຄ້າ ມີຕະຫລາດສົດຂາຍພືດພັນທັນຍາຫານຕ່າງໆ ຊີວິດການເປັນຢູ່ນັບມື້ນັບດີຂຶ້ນ. ອາດຈະເປັນເມືອງບໍ່ເງິນສົມ ຊື່ແທ້ໆ ໃນອະນາຄົດ.



ການໃສ່ບາດຂອງຊາວບ້ານ ທີ່ວັດທາດຊຽງດອນ

## ສະຖິຕິ ແລະ ໜັງສືໃບລານ
## ທີ່ສຳຫລວດ ສົກປີ 1998 - 19999
## ແຂວງ ອັດຕະປື,ຈຳປາສັກ ແລະ ໄຊຍະບູລີ
## ( 10 ຕຸລາ 1998 - 1999 )

| ລ/ດ | ແຂວງ/ເມືອງ/ວັດ | ບ້ານ | ເຫລັ້ມ | ຈຳນວນ | ຈຳນວນ | ຈຳນວນ | ຈຳນວນ | ຖ່າຍໃນໄມ | ໂຄຣຟີມ | |
|---|---|---|---|---|---|---|---|---|---|---|
| | | | ຜັບສາ | ຜູກ | ໃບສຳຫຼວດ | ມັດ | ເລື່ອງ | ຜູກ | ເລື່ອງ | ໃບລານ |
| I | ແຂວງອັດຕະປື | | | | | | | | | |
| | ເມືອງໄຊເຊດຖາ | | | | | | | | | |
| 1 | ວັດບ້ານຝັ່ງແດງ | ຝັ່ງແດງ | | 936 | 228 | 49 | 121 | 28 | 4 | 1,011 |
| 2 | ວັດບ້ານຊ້າຍ | ຊ້າຍ | | 379 | 89 | 17 | 68 | | | |
| 3 | ວັດບ້ານຕວຍ | ຕວຍ | | 78 | 26 | 5 | 23 | | | |
| 4 | ວັດຫລວງ | ວັດຫຼວງ | | 596 | 193 | 31 | 140 | 11 | 7 | 954 |
| 5 | ວັດທາດ | ວັດທາດ | | 305 | 127 | 13 | 118 | 13 | 2 | 353 |
| 6 | ວັດເໜືອ | ເໜືອ | | 360 | 106 | 17 | 85 | 5 | 2 | 495 |
| 7 | ວັດສຸກຂີຍະລາມ | ໄຊສີ | | 91 | 52 | 5 | 47 | | | |
| 8 | ວັດໂພໄຊ | ໂພໄຊ | | 632 | 130 | 30 | 87 | 69 | 3 | 840 |
| 9 | ວັດຊະແຄະ | ຊະແຄະ | | 300 | 85 | 12 | 76 | 1 | 1 | 20 |
| 10 | ວັດສົມໂຄດ | ສົມໂຄດ | | 33 | 10 | 2 | 8 | | | |
| 10 | ລວມເມືອງໄຊເຊດຖາ | | | 3,710 | 1,046 | 181 | 773 | 127 | 19 | 3,673 |
| | ເມືອງສະໜາມໄຊ | | | | | | | | | |
| 1 | ວັດບ້ານຫີນລາດ | ຫີນລາດ | | 47 | 28 | 2 | 23 | | | |
| 2 | ວັດບ້ານຫາດຍາວ | ຫາດຍາວ | | 92 | 43 | 5 | 39 | 15 | 2 | 340 |
| 2 | ລວມເມືອງສະໜາມໄຊ | | | 139 | 71 | 7 | 62 | 15 | 2 | 340 |
| | ເມືອງສາມັກຄີໄຊ | | | | | | | | | |
| 1 | ວັດຫຼວງເມືອງໃໝ່ | ວັດຫຼວງ | | 150 | 46 | 8 | 34 | | | |
| 2 | ວັດໂພໄຊຍະລາມ | ເຊກະໝານໃຕ້ | | 26 | 4 | | 3 | | | |
| 3 | ວັດເຊກະໝານ ເໜືອ | ເຊກະໝານ ເໜືອ | | 338 | 62 | 18 | 63 | | | |
| 4 | ວັດເຊກະໝານ ກາງ | ເຊກະໝານ ກາງ | | 443 | 74 | 19 | 57 | | | |
| 4 | ລວມເມືອງສາມະຄີໄຊ | | | 957 | 186 | 45 | 157 | | | |
| 16 | ລວມແຂວງອັດຕະປື 3 ເມືອງ | | | 4,806 | 1,303 | 233 | 992 | 142 | 21 | 4,013 |

| ລ/ດ | ແຂວງ/ເມືອງ/ວັດ | ບ້ານ | ເຫລັ້ມ | ຈຳນວນ | ຈຳນວນ | ຈຳນວນ | ຈຳນວນ | ຖ່າຍໄມໂຄຣຟິມ | | |
|---|---|---|---|---|---|---|---|---|---|---|
| | | | ພັບສາ | ຜູກ | ໃບສຳຫຼວດ | ມັດ | ເລື່ອງ | ຜູກ | ເລື່ອງ | ໃບລານ |
| II | ແຂວງຈຳປາສັກ | | | | | | | | | |
| | ເມືອງໂຂງ | | | | | | | | | |
| 1 | ວັດສີສຸພົນ | ອຸສ | | 2,003 | 368 | 159 | 213 | 456 | 46 | 9,464 |
| 2 | ວັດມີໄຊສີຈະເລີນເຜັດ | ໜອງໄຮໂລກ | | 1,268 | 198 | 99 | 127 | 367 | 27 | 8,934 |
| 3 | ວັດປ່າມ່ວງສີບຸນເຮືອງ | ບ້ານມີໄຊ | | 263 | 48 | 18 | 42 | 86 | 7 | 2,053 |
| 4 | ວັດສີດາຈັນ | ບ້ານດູ | | 435 | 92 | 29 | 67 | 48 | 4 | 842 |
| 5 | ວັດສີບຸນເຮືອງ | ບ້ານບົກ | | 362 | 69 | 24 | 57 | 25 | 5 | 473 |
| 6 | ວັດສີສຸມັງຄົ | ດົງຍາງ | | 1,046 | 180 | 72 | 132 | 19 | 5 | 415 |
| 7 | ວັດສີສະຫວ່າງ | ແກ້ງກາງ | | 232 | 61 | 14 | 43 | | | |
| 8 | ວັດໂພສີວິກາຍ | ໜອງດົງ | | 690 | 160 | 47 | 113 | 103 | 14 | 2,804 |
| 9 | ວັດສີສະຫວ່າງວົງ | ໂພນທອງ | | 515 | 96 | 35 | 66 | 4 | 1 | 99 |
| 10 | ວັດສີຊຸມຊື່ນ | ໂພໄຊ | | 673 | 115 | 39 | 87 | 48 | 6 | 1,034 |
| 11 | ວັດອຳພິຣະປັນຍາ | ຝັ່ງແດງ | | 580 | 149 | 32 | 104 | 15 | 4 | 372 |
| 12 | ວັດຈິດສະຫວ່າງ | ບ້ານພລິງ | | 204 | 50 | 12 | 44 | 1 | 1 | 43 |
| 13 | ວັດຄີລີວົງກົດ | ຫ້ວຍໂດນ | | 133 | 11 | 8 | 11 | | | |
| 14 | ວັດທ່ພຣະແກ້ວ | ວັດທ່ພຣະແກ້ວ | | 963 | 162 | 48 | 101 | 22 | 4 | 730 |
| 15 | ວັດທົ່ງສີເມືອງ | ໜອງບົວ | | 153 | 29 | 11 | 27 | 17 | 4 | 519 |
| 16 | ວັດອຳພາວັນ | ໃໝ່ | | 873 | 157 | 52 | 122 | 47 | 10 | 1,042 |
| 17 | ວັດສີສຸພົນ | ກະດື່ນ | | 627 | 94 | 40 | 74 | 7 | 2 | 180 |
| 18 | ວັດວິໄຊຍະຣາມ | ໜອງໄຣທາ | | 821 | 120 | 58 | 69 | 21 | 4 | 563 |
| 19 | ວັດໄຊຍະສົງຫານ | ສັກເມືອງ | | 1,975 | 287 | 136 | 178 | 203 | 21 | 5,984 |
| 20 | ວັດໂຄກາສຍາຣາມ | ສະໜັ້ນ | | 980 | 145 | 70 | 91 | 61 | 9 | 1,182 |
| 21 | ວັດບ້ານໜອງສະລາ | ໜອງສະລາ | | 72 | 9 | 3 | 9 | 12 | 1 | 128 |
| 21 | ລວມເມືອງໂຂງ | | | 14,868 | 2,600 | 1,006 | 1,777 | 1,562 | 175 | 36,861 |
| | ເມືອງຈຳປາສັກ | | | | | | | | | |
| 1 | ວັດເມືອງແສນຍາຣາມ | ເມືອງແສນ | | 469 | 89 | 34 | 60 | 3 | 1 | 84 |
| 2 | ວັດອາມາດ | ອາມາດ | | 529 | 83 | 29 | 52 | 22 | 5 | 532 |
| 3 | ວັດພະພິນ | ພະພິນ | | 310 | 61 | 14 | 43 | 1 | 1 | 22 |
| 4 | ວັດໂພທິຍາຣາມ | ບ້ານໂພໄຊ | | 351 | 69 | 22 | 57 | 1 | 1 | 20 |
| 5 | ວັດຍຸດຕິທັມມະທະຣາຣາມ | ວັດທົ່ງ | | 451 | 61 | 42 | 33 | 129 | 13 | 3,533 |
| 6 | ວັດໂພສີຄຳພາຣາມ | ໜອງເຖີ່ນ | | 216 | 44 | 16 | 43 | | | |
| 7 | ວັດໂພທິປັກຂີຍິກາວາດ | ບ້ານກະດິບ | | 86 | 4 | 4 | 2 | | | |
| 8 | ວັດພຸດທະວະນາຣາມ | ເມືອງກາງ | | 5,061 | 646 | 366 | 302 | 328 | 25 | 9,264 |
| 8 | ລວມເມືອງຈຳປາສັກ | | | 7,473 | 1,057 | 527 | 592 | 484 | 46 | 13,455 |

| ລ/ດ | ແຂວງ/ເມືອງ/ວັດ | ບ້ານ | ເຫລັ້ມ ພັບສາ | ຈຳນວນ ຜູກ | ຈຳນວນ ໃບລ້ານຫຼອດ | ຈຳນວນ ມັດ | ຈຳນວນ ເລື່ອງ | ຖ່າຍໄມໂຄຣຟິມ ຜູກ | ຖ່າຍໄມໂຄຣຟິມ ເລື່ອງ | ຖ່າຍໄມໂຄຣຟິມ ໃບລານ |
|---|---|---|---|---|---|---|---|---|---|---|
| 8 | ລວມເມືອງຈຳປາສັກ | | | 7,473 | 1,057 | 527 | 592 | 484 | 46 | 13,455 |
| | ເມືອງສຸຂຸມາ | | | | | | | | | |
| 1 | ວັດຈອມສີ | ຕູມໃຫຍ່ | | 899 | 152 | 58 | 117 | 67 | 12 | 1,706 |
| 2 | ວັດສີມະຫາທາດ | ບ້ານທາດ | | 22 | 8 | 2 | 8 | | | |
| 3 | ວັດບ້ານຕູມນ້ອຍ | ຕູມນ້ອຍ | | 86 | 10 | 8 | 8 | | | |
| 4 | ວັດບ້ານກອກ | ບ້ານກອກ | | 151 | 27 | 9 | 22 | | | |
| 5 | ວັດອຸທຸມໃໝ່ | ອຸທຸມໃໝ່ | | 142 | 26 | 7 | 21 | | | |
| 6 | ວັດອຸທຸມເກົ່າ | ອຸທຸມເກົ່າ | | 60 | 20 | 4 | 18 | | | |
| 7 | ວັດໂພທິສຶກສາຣາມ | ສຸຂຸມາໃຕ້ | | 354 | 79 | 19 | 54 | 3 | 1 | 88 |
| 8 | ວັດທົ່ງສະຫວ່າງ | ສຸຂຸມາທົ່ງ | | 451 | 100 | 22 | 70 | 3 | 2 | 88 |
| 9 | ວັດສີສະງ່າອາຣົມ | ທັບຈານ | | 178 | 45 | 8 | 39 | | | |
| 9 | ລວມເມືອງສຸຂຸມາ | | | 2,343 | 457 | 137 | 357 | 73 | 15 | 1,882 |
| | ເມືອງໂຂງ | | | | | | | | | |
| 1 | ວັດໂພນແກ້ວວິໄຊ | ດອນຊ້າງໄພ | | 2,020 | 304 | 204 | 179 | 179 | 15 | 4,669 |
| 2 | ວັດວິທະຍາຣາມ | ໂພນທັນ | | 2,331 | 354 | 202 | 150 | 111 | 16 | 3,097 |
| 3 | ວັດອຸທຸມພອນ | ຫົວດອນ | | 586 | 99 | 48 | 77 | 30 | 2 | 604 |
| 4 | ວັດອຳພາວັນ | ລີປະຄືກາງ | | 1,468 | 256 | 114 | 132 | 125 | 18 | 3,272 |
| 5 | ວັດໂພສີແກ້ວ | ລີປະຄືຈິກ | | 756 | 158 | 63 | 98 | 15 | 4 | 348 |
| 6 | ວັດສີດາຈັນ | ດອນໃຈນ | | 505 | 100 | 28 | 53 | 2 | 1 | 27 |
| 7 | ວັດອຳພາພອນ | ດອນກະເດັນ | | 376 | 79 | 34 | 47 | | | |
| 8 | ວັດສິມມະນັດ | ດອນຣີນ້ອຍ | | 235 | 43 | 17 | 23 | | | |
| 9 | ວັດສະແກ້ວສະພັງ ທອງໜອງບົວຫຼວງ | ຄອນນ້ອຍ ຍະນາຄອນ | | 180 | 31 | 19 | 29 | 32 | 2 | 762 |
| 10 | ວັດອຸທຸມພລາຣາມ | ດອນທໍ່ຣະທີ | | 271 | 67 | 32 | 49 | | | |
| 11 | ວັດສະແກ້ວປະທຸມ ມາຣາມ | ທ່າໂພໃຕ້ | | 347 | 73 | 24 | 43 | | | |
| 12 | ວັດໂພນຈານ | ທ່າພ້າວ | | 129 | 31 | 9 | 26 | | | |
| 13 | ວັດພວງແກ້ວ ອະຂຸໂນໄທ | ກາງໂຂງ | | 146 | 31 | 9 | 25 | | | |
| 14 | ວັດສຸທັດສະນະ | ບ້ານນາ | | 981 | | 57 | 83 | 16 | 3 | 427 |
| 15 | ວັດສີຣີມັງຄະລາຣາມ | ບ້ານຫ້ວຍ | | 343 | 67 | 23 | 50 | | | |
| 16 | ວັດເທບສຸຣິນພູຕິນ | ຫາງໂຂງ | | 871 | 169 | 72 | 110 | 55 | 6 | 1,477 |
| 17 | ວັດສີລາບັນທະລັງສີ | ຫີນສິວ | | 1,304 | 213 | 115 | 143 | 379 | 31 | 5,010 |
| 17 | ລວມເມືອງໂຂງ | | | 12,849 | 2,077 | 1,070 | 1,317 | 944 | 98 | 19,693 |

| ລ/ດ | ແຂວງ/ເມືອງ/ວັດ | ບ້ານ | ເຫລັ້ມ | ຈຳນວນ | ຈຳນວນ | ຈຳນວນ | ຈຳນວນ | ຖ່າຍໃນໄຊຟິມ | | |
|---|---|---|---|---|---|---|---|---|---|---|
| | | | ພັບສາ | ຜູກ | ໃບສຳຫຼວດ | ມັດ | ເລື່ອງ | ຜູກ | ເລື່ອງ | ໃບລານ |
| | ເມືອງມູນລະປະໂມກ | | | | | | | | | |
| 1 | ວັດໂພທິທັມມາຣາມ | ດອນພານເລົາ | | 875 | 140 | 83 | 94 | 33 | 4 | 856 |
| 2 | ວັດສີສະອາດ | ບ້ານເວີນ | | 1,158 | 186 | 66 | 101 | 7 | 3 | 176 |
| 3 | ວັດໂຕພູມຣັດຕະມາຣາມ | ດອນບາງລອຍກາງ | | 274 | 52 | 22 | 41 | 9 | 4 | 218 |
| 3 | ລວມເມືອງມູນລະປະໂມກ | | | 2,307 | 378 | 171 | 236 | 49 | 11 | 1,250 |
| 58 | ລວມແຂວງຈຳປາສັກ 5 ເມືອງ | | | 39,840 | 6,201 | 2,740 | 4,043 | 3,063 | 334 | 71,891 |
| III | ແຂວງໄຊຍະບູລີ | | | | | | | | | |
| | ເມືອງຊຽງຮອນ | | | | | | | | | |
| 1 | ວັດສຸວັນນະບົວຄຳ | ບ້ານຄ້ຳ | 110 | 2,407 | 480 | 92 | 257 | 117 | 18 | 2,478 |
| 2 | ວັດກຸລະກຸະດາລາມ | ບ້ານຊຶ່ງ | 40 | 1,387 | 348 | 116 | 221 | 50 | 9 | 1,009 |
| 3 | ວັດຖ້ຳອຸດົມຄຳ | ບ້ານຊຶ່ງ | 74 | 283 | 152 | 29 | 120 | 1 | 1 | 15 |
| 4 | ວັດພຣະທາດສາສດາຣາມ | ວັດທາດ | 21 | 681 | 194 | | 166 | 35 | 10 | 625 |
| 5 | ວັດວ້າຍສີມູນບັນທາລາມ | ບ້ານວ້າຍ | 8 | 1,205 | 219 | 78 | 142 | 94 | 14 | 1,917 |
| 6 | ວັດອຸດທະຍາລາມ | ປ່າຫວ້ານ | | 480 | 89 | 31 | 66 | 3 | 1 | 79 |
| 7 | ວັດແກ່ນແກ້ວສາສດາຣາມ | ບ້ານແກ່ນ | 9 | 459 | 90 | 25 | 62 | 3 | 1 | 79 |
| 8 | ວັດໂພທິຍາຣາມ | ດອນເຟືອງ | 43 | 930 | 189 | 67 | 126 | 33 | 4 | 645 |
| 9 | ວັດຜົນໂຍດາຣາມ | ນາຮອນ | 2 | 471 | 106 | 25 | 86 | 4 | 1 | 54 |
| 10 | ວັດຫ້ວຍຄູນໄຊຍະມຸງຄຸນ | ຫ້ວຍຄູນ | | 656 | 137 | 37 | 102 | | | |
| 11 | ວັດກູກແກ້ວ | ບ້ານກູກ | | 261 | 48 | 20 | 37 | 9 | 2 | 168 |
| 12 | ວັດສີບປະຣະດາຣາ | ບ້ານປຶ່ງ | 52 | 1,211 | 268 | 8 | 186 | 73 | 12 | 1,357 |
| 12 | ລວມເມືອງຊຽງຮອນ | | 359 | 10,431 | 2,320 | 528 | 1,571 | 422 | 73 | 8,426 |
| 12 | ລວມແຂວງໄຊຍະບູລີ | | 359 | 10,431 | 2,320 | 528 | 1,571 | 422 | 73 | 8,426 |
| 85 | ລວມທັງຫມົດ ສົກປີ 98-99 : | | 359 | 55,077 | 9,824 | 3,501 | 6,606 | 3,627 | 428 | 84,330 |

# ເອກະສານສໍາຄັນທີ່ພົບເຫັນ
## ສົກປີ ໑໙໙໘-໑໙໙໙

| ລ/ດ | ແຂວງ/ເມືອງ/ຊື່ເລື່ອງ | ຊື່ວັດ | ຈໍານວນຜູກ | | ຈ.ສ. ພ.ສ. | ໝາຍເຫດ |
|---|---|---|---|---|---|---|
| | | | ພັບສາ | ໃບລານ | | |
| | **I. ແຂວງອັດຕະປື** | | | | | |
| | **ເມືອງໄຊເສດຖາ** | | | | | |
| 1 | ສັງສິນໄຊ | ວັດບ້ານຝັ່ງແດງ | | 1 | ພ.ສ. 2436 | ຜູກໃຫຍ່ (ບໍ່ຄົບ) |
| 2 | ມະຫາຊັບ | -"- | | 24 | | ບໍ່ຄົບ |
| 3 | ກາລະເກດ (ຂອງຊາວບ້ານ) | ວັດບ້ານຕວຍ | | 1 | ພ.ສ. 2478 | ຜູກໃຫຍ່ (ຄົບ) |
| 4 | ທັມສາດຫລວງ | ວັດບ້ານຫລວງ | | 1 | | ບໍ່ຄົບ |
| 5 | ຈໍາປາສີ່ຕົ້ນ (ຂອງຊາວບ້ານ) | -"- | | 1 | | ຄົບ |
| 6 | ລະບຽບກົດໝາຍ | ວັດທາດ | | 1 | | ຄົບ |
| 7 | ວິນັຍທອນສິກຂາບົດ | ວັດທາດ | | 12 | | ຄົບ |
| 8 | ມູລຕັນໄຕ | ວັດເໜືອ | | 4 | | ບໍ່ຄົບ |
| 9 | ສຸດຕັນຕະປິຕະກະ | ວັດໂພໄຊ | | 40 | ພ.ສ. 2489 | ບໍ່ຄົບ |
| 10 | ວິນັຍປິດກະ | ວັດໂພໄຊ | | 16 | ພ.ສ. 2489 | ບໍ່ຄົບ |
| 11 | ອະພິທັມປິດກະ | ວັດໂພໄຊ | | 13 | ພ.ສ. 2489 | ບໍ່ຄົບ |
| | **ເມືອງສະໜາມໄຊ** | | | | | |
| 12 | ກາລະເກດ | ວັດບ້ານຫາດຍາວ | | 14 | ພ.ສ. 2482 | ບໍ່ຄົບ |
| | **I. ແຂວງຈໍາປາສັກ** | | | | | |
| | **ເມືອງໂພນທອງ** | | | | | |
| 13 | ມະໂຫສົດ | ວັດສີສຸພົນ | | 11 | ຈ.ສ. 1152 | ຄົບ |
| 14 | ກົດໝາຍຄອງບູຮານ | ວັດສີສຸພົນ | | 2 | | ຄົບ |
| 15 | ພື້ນເມືອງວຽງຈັນ | ວັດສີສຸພົນ | | 5 | ພ.ສ. 2513 | ຄົບ |
| 16 | ກາບລ້ອຍສາຍຄໍາ | ວັດສີສຸມັງຄົ໌ | | 3 | | ບໍ່ຄົບ |
| 17 | ມຫາປີສອນໂລກ | ວັດສີສຸມັງຄົ໌ | | 3 | ພ.ສ. 2481 | ຄົບ |
| 18 | ຄໍາພີປາຣາຊິກັນ | ວັດໂພສີວິກາຍ | | 17 | ພ.ສ. 2451 | ບໍ່ຄົບ |
| 19 | ຄໍາພີປາຈິດຕີ | ວັດໂພສີວິກາຍ | | 20 | | ບໍ່ຄົບ |
| 20 | ມຫາສະໝຸດ ມຫາບາທີ | ວັດມີໄຊຈະເຣີນເຜີດ | | 2 | | ຄົບ |
| 21 | ທັມມະບົທ (ປາລີ) | ວັດມີໄຊຈະເຣີນເຜີດ | | 20 | | ຄົບ |
| 22 | ສຸພົມມະໂນກອະ | ວັດມີໄຊຈະເຣີນເຜີດ | | 9 | ຈ.ສ. 1171 | ຄົບ |
| 23 | ຄໍາພີອະທິກັມ (ປາລີ) | ວັດປ່າມ່ວງສີບຸນເຮືອງ | | 17 | | ຄົບ |
| 24 | ພະລັກ ພະລາມ (ມັດ 2,3,4) | ວັດປ່າມ່ວງສີບຸນເຮືອງ | | 32 | ພ.ສ. 2494 | ຄົບ |
| 25 | ຄູຣຸເທສ | ວັດປ່າມ່ວງສີບຸນເຮືອງ | | 5 | | ບໍ່ຄົບ |

| | | | | | | |
|---|---|---|---|---|---|---|
| 26 | ຜາລາງຄຳລາງ | ວັດປ່າມ່ວງສີບຸນເຮືອງ | | 5 | ພ.ສ. 2517 | ຄົບ |
| 27 | ພຸດທະເສນ (ນາງສິບສອງ) | ວັດສີດາຈັນ | | 4 | ພ.ສ. 2472 | ຄົບ |
| 28 | ປະຖົມສົມໂພທິ (ຄຳກອນ) | ວັດສີດາຈັນ | | 30 | ພ.ສ. 4283 | ບໍ່ຄົບ |
| 29 | ໜ້າຜາກໂກກະຖິ່ນ (ລຳ) | ວັດສີດາຈັນ | | 9 | ຈ.ສ. 1200 | ບໍ່ຄົບ |
| 30 | ລຳທ້າວເໝົາຄຳ (ພື້ນວຽງ) | ວັດສີບຸນເຮືອງ | | 6 | | ຄົບ |
| 31 | ມູລກິຈຈາຍະນະ (ປາລີ) | ວັດສີຊຸມຊື່ນ | | 9 | | ຄົບ |
| 32 | ໂລກບັຍຍາຕະກະ (ທະນັບໄຊຍະບັນໂດ) | ວັດສີຊຸມຊື່ນ | | 24 | | ຄົບ |
| 33 | ລຳນາງຜົມຫອມ | ວັດສີຊຸມຊື່ນ | | 4 | ພ.ສ. 2489 | ຄົບ |
| 34 | ທ້າວຄັດ ທ້າວຊີ່ | ວັດສີຊຸມຊື່ນ | | 3 | ພ.ສ. 2516 | ຄົບ |
| 35 | ຂຸນທຶງ ຂຸນເທືອງ | ວັດຄຳພິຣະປັນຍາ | | 3 | ພ.ສ. 2441 | ບໍ່ຄົບ(ຈົບຢູ່ຜູກ4) |
| 36 | ມູລກິຈຈາຍະນະ (ສົພ) | ວັດຄຳພິຣະປັນຍາ | | 9 | ຈ.ສ. 1173 | ຄົບ |
| 37 | ຈົດໝາຍເຫດເມືອງຈຳປາສັກ | ວັດຈີກສະຫວ່າງ | | 1 | | ບໍ່ຄົບ |
| 38 | ສ້ອຍລາຍຄຳ (ກົດໝາຍ) | ວັດຫໍພຣະແກ້ວ | | 1 | | ບໍ່ຄົບ |
| 39 | ຜາລ່າງ | ວັດພຣະແກ້ວ | | 1 | | ຄົບ (ລາວເດີມ) |
| 40 | ກຳພ້າເຫງັບຊົ້ມ | ວັດທົ່ງສີເມືອງ | | 4 | ພ.ສ. 2516 | ຄົບ |
| 41 | ທ້າວໂສວັດ (ໜັງສືລາວເດີມ) | ວັດທົ່ງສີເມືອງ | | 1 | | ບໍ່ຄົບ (ຜູກໃໝ່) |
| 42 | ພະວໍພະຕາ | ວັດອຳພາວັນ | | 7 | | ບໍ່ຄົບ |
| 43 | ມູລກິຈຈາຍະນະ (ສົພ) | ວັດອຳພາວັນ | | 8 | ຈ.ສ. 1157 | ບໍ່ຄົບ |
| 44 | ຄາມີບີອາໄພຍະສູດ | ວັດອຳພາວັນ | | 1 | ຈ.ສ. 1159 | ບໍ່ຄົບ |
| 45 | ປາຈິດຕີ (ປາລີ) | ວັດອຳພາວັນ | | 7 | ຈ.ສ. 1170 | ບໍ່ຄົບ |
| 46 | ພື້ນເມືອງລັງກາທີປ | ວັດວິໄຊຍະຣາມ | | 3 | ພ.ສ. 2465 | ຄົບ |
| 47 | ພື້ນເມືອງຊາຍຟອງ | ວັດວິໄຊຍະຣາມ | | 1 | | ຄົບ |
| 48 | ມັງຄະລະທີປ (ມັງຄະລະສູດ) | ວັດວິໄຊຍະຣາມ | | 10 | ຈ.ສ. 1159 | ບໍ່ຄົບ |
| 49 | ຈຸລວັດຄະ | ວັດໄຊຍະສິງຫານ | | 11 | ຈ.ສ. 1126 | ຄົບ |
| 50 | ປາຣາຊິກັນ | ວັດໄຊຍະສິງຫານ | | 7 | ຈ.ສ. 1125 | ບໍ່ຄົບ |
| 51 | ພຣະສິທົງ (ຕຳນານ) | ວັດໄຊຍະສິງຫານ | | 2 | ພ.ສ. 2271 | ຄົບ |
| 52 | ສັງຮອມທາດ | ວັດໄຊຍະສິງຫານ | | 5 | ຈ.ສ. 1117 | ຄົບ |
| 53 | ສຸວັນນະສາມ | ວັດໂອກາສຍາຣາມ | | 4 | ພ.ສ. 2310 | ຄົບ |
| 54 | ສຸຊະວັນນະຈັກ | ວັດໂອກາສຍາຣາມ | | 4 | ຈ.ສ. 1132 | ບໍ່ຄົບ |
| 55 | ວິທຸລບັນດິດ | ວັດໂອກາສຍາຣາມ | | 4 | ຈ.ສ. 1155 | ບໍ່ຄົບ |
| 56 | ສິງຄາລະສູດ | ວັດໂອກາສຍາຣາມ | | 6 | ຈ.ສ. 1155 | ບໍ່ຄົບ |
| | ເມືອງຈຳປາສັກ | | | | | |
| 57 | ປະຖົມມະສິກຂາບົທ (ຂອມ) | ວັດບຸດດີທັມມະທະຣາຣາມ | | 2 | ພ.ສ. 2364 | ຄົບ |
| 58 | ສະມັນຕະປາສາທິກາ (ມັດຖົ້ນ) | ວັດບຸດດີທັມມະທະຣາຣາມ | | 10 | ຈ.ສ. 1021 | ບໍ່ຄົບ |
| 59 | ທັມມະບົທ (ປາລີ ມັດສາມ) | - " - | | 11 | ຈ.ສ. 1070 | ຄົບ |
| 60 | ມິລິນທະປັນຫາ (ປາລີ) | - " - | | 17 | ຈ.ສ. 999 | ບໍ່ຄົບ |
| 61 | ປິກຂະທັນດະ (ສົພ) | - " - | | 19 | ຈ.ສ. 1184 | ບໍ່ຄົບ |

| | | | | | | |
|---|---|---|---|---|---|---|
| 62 | ສູດມົນ (ນິສັຍ) | - " - | | 7 | ຈ.ສ. 1160 | ຄົບ |
| 63 | ສັພພະນາມ (ມັດ 3, 4) | - " - | | 16 | ຈ.ສ. 1175 | ຄົບ |
| 64 | ປາຣາຊິກັນ (ປາລີ) | ວັດພຸດທະວະນາຣາມ | | 14 | ຈ.ສ. 923 | ບໍ່ຄົບ |
| 65 | ສີລະຂັນທະວັຄ (ປາລີ) | - " - | | 10 | ຈ.ສ. 960 | ບໍ່ຄົບ |
| 66 | ມູລກັຈຈາຍະນະ (ສັພ) | - " - | | 10 | ຈ.ສ. 1055 | ຄົບ |
| 67 | ຈູລວັຄ (ປາລີ) | - " - | | 11 | ຈ.ສ. 1055 | ບໍ່ຄົບ |
| 68 | ມູລກັຈຈາຍະນະ (ສັພ) | - " - | | 10 | ຈ.ສ. 1083 | ບໍ່ຄົບ |
| 69 | ເອກະນິບາດ (ມັດສີ່) | - " - | | 8 | ຈ.ສ. 1144 | ບໍ່ຄົບ |
| 70 | ໂພທິປັກຂິຍະທັມ (ຂອມ) | - " - | | 10 | ພ.ສ. 2324 | ຄົບ |
| | **ເມືອງສຸຂຸມາ** | | | | | |
| 71 | ວິນັຍຂອມ | ວັດຈອມສີ | | 4 | ຈ.ສ. 1149 | ຄົບ |
| 72 | ມຫາວົງ | - " - | | 6 | ຈ.ສ. 1160 | ຄົບ |
| 73 | ນິກອະທັນດະ (ສັພ) | - " - | | 10 | ຈ.ສ. 1170 | ຄົບ |
| 74 | ພື້ນພະບາງ | ວັດໂພທິພິກສາຣາມ | | 3 | | ບໍ່ຄົບ |
| 75 | ປາຣາຊິກັນ | ວັດທົ່ງສະຫວ່າງ | | 1 | ຈ.ສ. 1050 | ບໍ່ຄົບ |
| 76 | ທ້າວອູສາວກ້ຳ | - " - | | 2 | | ບໍ່ຄົບ |
| | **ເມືອງໂຂງ** | | | | | |
| 77 | ມຫາວັຄ (ປາລີ ມັດຕົ້ນ) | ວັດໂພນແກ້ວວິໄຊ | | 12 | ຈ.ສ. 968 | ບໍ່ຄົບ |
| 78 | ມຫາວັຄ (ປາລີ ມັດຕົ້ນ) | - " - | | 10 | ຈ.ສ. 1027 | ບໍ່ຄົບ |
| 79 | ຈຸດຕະນິບາດ (ຈຕຸກະນິບາດ) | - " - | | 6 | ຈ.ສ. 1059 | ບໍ່ຄົບ |
| 80 | ປາຣາຊິກັນ (ສັພ) | ວັດວິທທະຍາຣາມ | | 10 | ຈ.ສ. 1018 | ຄົບ |
| 81 | ທັມມະປະທະ (ນິສັຍທັມມະບົທ) | - " - | | 8 | ຈ.ສ. 1085 | ຄົບ |
| 82 | ຈັນທະອາດ | - " - | | 6 | ຈ.ສ. 1115 | ຄົບ |
| 83 | ສິກຂາບົທວິນິຈສັຍ | ວັດວິທທະຍາຣາມ | | 10 | ພ.ສ. 2322 | ຄົບ |
| 84 | ສະໄມທະວິໄນທະນີ | ວັດອຸທຸມພອນ | | 15 | ຈ.ສ. 1166 | ຄົບ |
| 85 | ປາຣາຊິກັນ | - " - | | 15 | ຈ.ສ. 1171 | ບໍ່ຄົບ |
| 86 | ເອສະປຸຣານະຕິກະ (ມາຕິກາອັດຖະ) | ວັດອຳພາວັນ | | 3 | ຈ.ສ. 1026 | ບໍ່ຄົບ |
| 87 | ສມາສ (ນິສັຍ, ມັດກາງ) | - " - | | 11 | ຈ.ສ. 1015 | ຄົບ |
| 88 | ມູລຕັນໄຕ (ກົດຫມາຍ) | - " - | | 1 | ຈ.ສ. 1087 | ບໍ່ຄົບ |
| 89 | ອຸປະຣິປັນນາສ | - " - | | 2 | ຈ.ສ. 1136 | ບໍ່ຄົບ |
| 90 | ເອກະນິບາຕ | ວັດໂພສີແກ້ວ | | 8 | ຈ.ສ. 1169 | ຄົບ |
| 91 | ພຸຣິທັດ | - " - | | 4 | ຈ.ສ. 1180 | ຄົບ |
| 92 | ປັນທາຣາຊະວັດ | ວັດໂພສີແກ້ວ | | 1 | | ຄົບ |
| 93 | ກົດຫມາຍບູຣານ | - " - | | 2 | | ຄົບ |
| 94 | ກົດຫມາຍບູຣານ | ວັດສີດາຈັນ | | 2 | | ບໍ່ຄົບ |
| 95 | ສະມັນຕະປາສາທິກາ | ວັດສະແກ້ວສະຝັ່ງທອງ | | 18 | ຈ.ສ. 1039 | |
| 96 | ປາຈິດຕີ | - " - | | 14 | ຈ.ສ. 1156 | |
| 97 | ສາມັນຕະປາສາທິກາ (ນິສັຍ) | ວັດສີລາບັນພະລັງສີ | | 5 | ຈ.ສ. 980 | ບໍ່ຄົບ (ມັດ 2) |

| | | | | | | |
|---|---|---|---|---|---|---|
| 98 | ສາມັນຕະປາສາທິກາ (ນິສັຍ) | -"- | | 9 | ຈ.ສ. 952 | ຄົບ (ມັດ 2) |
| 99 | ສຸດຕະສັງຄະຫະ (ປາລີ) | -"- | | 3 | ຈ.ສ. 967 | ບໍ່ຄົບ |
| 100 | ມັຊຊິມະປັນນາສ (ປາລີ) | -"- | | 12 | ຈ.ສ. 1008 | ບໍ່ຄົບ |
| 101 | ວັງສະມາລີນີ (ປາລີ) | -"- | | 3 | ຈ.ສ. 1011 | ບໍ່ຄົບ |
| 102 | ມຫາຊະນົກ | ວັດເທບຊຸຣິນພູດິນ | | 5 | ຈ.ສ. 1162 | ຄົບ |
| 103 | ພຍາກຸສລາດ | -"- | | 4 | ຈ.ສ. 1146 | ຄົບ |
| 104 | ໂລກປັຍຊາຕະກະ (ມັດສອງ) | -"- | | 9 | ຈ.ສ. 1164 | ຄົບ |
| 105 | ໂລກປັຍຊາຕະກະ (ມັດຕົ້ນ) | -"- | | 9 | ຈ.ສ. 1164 | ບໍ່ຄົບ |
| 106 | ສິລະຂັນທະວັຄ | -"- | | 10 | ຈ.ສ. 1169 | ຄົບ |
| 107 | ໃຍຊະນາປະຣິວາຣ | ວັດສຸທັດສະນະ | | 1 | ຈ.ສ. 991 | ບໍ່ຄົບ |
| 108 | ທັມມະປະທະ (ມັດຕົ້ນ) | -"- | | 10 | ຈ.ສ. 1080 | ຄົບ |
| 109 | ທັມມະປະທະ (ນິສັຍ, ມັດສາມ) | -"- | | 2 | ຈ.ສ. 1163 | ບໍ່ຄົບ |
| 110 | ວິສຸທທິມັຄ | -"- | | 3 | ຈ.ສ. 1119 | ບໍ່ຄົບ |
| | **III. ແຂວງໄຊຍະບູລີ** | | | | | |
| | **ເມືອງຊຽງຮອນ** | | | | | |
| 111 | ວິນັຍທັງຫ້າສັງເຂປ (ສັພ) | ວັດສຸວັນນະນິວຄຳ | | 5 | ຈ.ສ. 983 | ຄົບ |
| 112 | ໂວຫານທັມມະບົທ (ມັດເຈັດ) | -"- | | 7 | ຈ.ສ. 1178 | ຄົບ |
| 113 | ຍະໄສທະຣານິພພານ | ວັດກຸລະກຸະດາລາມ | | 6 | ຈ.ສ. 1186 | ຄົບ |
| 114 | ວິນັຍສັງຄະຫະ | -"- | | 7 | ຈ.ສ. 1122 | ຄົບ |
| 115 | ມູລກັຈຈາຍະນະ | -"- | | 9 | ຈ.ສ. 1144 | ຄົບ |
| 116 | ກອນສານພະລະສັງຂຍາ (ຜັບສາ) | ວັດກົ້າອຸຕຸມຄຳ | | 1 | | ຄົບ |
| 117 | ປາຕິໂມກ (ສັພ) | ວັດພຣະທາດສາສດາຣາມ | | 3 | ຈ.ສ. 1043 | ຄົບ |
| 118 | ພຸທທະຄຸນ | ວັດວ້າຍສີມຸນປັນທາລາມ | | 5 | ຈ.ສ. 1188 | ຄົບ |
| 119 | ມຫາສະມັຍຍະສູດຣອມ | -"- | | 1 | ຈ.ສ. 1170 | ຄົບ |
| 120 | ຊຸ້ມພູປະຕິສູດ | ວັດຄຸດທະຍາລາມ | | 3 | ຈ.ສ. 1171 | ຄົບ |
| 121 | ຕຳນານທາດຊຸມຄຳ (ຊຽງລົມ) | ວັດໂພທິຍາຣາມ | | 1 | ຈ.ສ. 1280 | ຄົບ |
| 122 | ສິນໄຊເທສນາ (ລຳ) | ວັດພົມໂຍດາຣາມ | | 4 | ຈ.ສ. 1125 | ບໍ່ຄົບ |
| 123 | ທະນັນໄຊເສດກີ | ວັດທິບປະຂະດາຣາມ | | 6 | ຈ.ສ. 1125 | ຄົບ |
| 124 | ປະຖົມສົມໂພທິ | -"- | | 9 | ຈ.ສ. 1182 | ຄົບ |
| 124 | ລວມ | | | 960 | | |

ບົດສຳພາດ.... ຕໍ່ຈາກໜ້າ 11

ມາ ແລະ ຮັກສາບໍ່ໃຫ້ສູນຫາຍໄປ ເຮັດໃຫ້ ຊາວລາວຊາວພຸດເຫັນເຖິງຄວາມເອກອ້າງທະນົງໃຈນຳປະຫວັດສາດ ມູນມໍລະດົກຂອງຊາດ. ກູ້າປະລິວັດໜັງສືບູຮານ ແລ້ວນຳມາເປັນຫລັກສູດການສິດສອນ ຈະເປັນການດີທັງເຮັດໃຫ້ອ່ານງ່າຍໂດຍສະເພາະແມ່ນວັນນະຄະດີບູຮານ, ຄຳສອນທາງພຸດທະສາສະໜາ, ຄຳສອນຂອງປັນພະບຸລຸດເປັນຕົ້ນແມ່ນກົດໝາຍການປົກຄອງໃນສະໄໝກ່ອນ ເປັນ ການດີເຮັດໃຫ້ເຮົາຮູ້ວ່າການປົກຄອງແຕ່ກ່ອນເປັນແນວໃດ ແລະ ທຽບໃສ່ປະຈຸບັນເປັນແນວໃດ.

**ບໍລິຄຳໄຊ....ຕໍ່ຈາກໜ້າ 14**



*ອ້າຍຈົວ ແລະ ຄູບາ ຢູ່ແຂວງຫລວງພະບາງ ກຳລັງຕັດໃບລານເພື່ອໄວ້ຈານ (ຂຽນ) ໜັງສືທຳ*

ທ່ານບຸນເລີດ ຂະແໜງວັດທະ ນະທຳແຂວງ ບອກໃຫ້ຮູ້ວ່າ ຢູ່ແຂວງນີ້ ກວມອັດຕາສ່ວນສູງແມ່ນ ເຜົ່າເມີ້ຍ, ເມື່ອກ່ອນເຂົາເຈົ້າມີໂຕໜັງສືຂອງເຜົ່າເອງ ຂຽນໃສ່ເຈ້ຍສາ ແຕ່ດຽວນີ້ບໍ່ມີໃຜອ່ານໄດ້. ຢູ່ບ້ານໂພນຕານ ເມືອງ ຄຳເກີດ ແຂວງ ບໍລິຄຳໄຊ ຍັງມີໜັງສືໃບລານຂຽນກ່ຽວກັບເລື່ອງ "ຄຳສາບານຂອງເຈົ້າເມືອງ" ໃນເດືອນຫ້າລາວຂອງທຸກໆປີ ຊາວບ້ານມີການທັດສົງໜັງສືດັ່ງກ່າວນີ້ແລະ ທ່ານຍັງມີແຜນການຂຽນກ່ຽວກັບປະຫວັດຮີດຄອງປະເພນີຂອງເຜົ່າເມີ້ຍ, ພ້ອມທັງຂຸດຄົ້ນສືບລະປະວັນນະຄະດີຂອງເຜົ່າຍັ້ນຳອີກ.

ແຂວງບໍລິຄຳໄຊ ເວົ້າເຖິງວຽກງານວັດທະນະທຳແລ້ວ ຍັງມີຫລາຍໜ້າວຽກທີ່ສຳຄັນຫລາຍຢ່າງແຕ່ພະນັກງານພາລະກອນ ຊ້ຳຜັດມີໜ້ອຍ ຍັງຕອບສະໜອງບໍ່ໄດ້ກັບຄວາມຕ້ອງການ, ແຕ່ເຖິງປານນັ້ນອ້າຍນ້ອງຢູ່ໃນພະແນກກໍ່ໃຈເຖິງ ກ້າເຮັດ- ກ້າທຳ, ກ້າເຜີຍແຜ່, ຈຶ່ງມີບ້ານວັດທະນະທຳເກີດຂຶ້ນໄດ້. ມີຫລາຍ ຄົນສົນໃຈອາດຈະກາຍເປັນຈຸດດຶງດູດແຂກຕ່າງດ້າວ, ທ້າວຕ່າງແດນໄປທ່ຽວແຂວງບໍລິຄຳໄຊຫລາຍຂຶ້ນກວ່າເກົ່າ.

*ໂດຍ: ຄຳສິງ ວົງສະຫວ່າງ*


## ເຈົ້າຂອງ

ໂຄງການປົກປັກຮັກສາໜັງສືໃບລານລາວ
(ການຮ່ວມມື ລາວ-ເຢຍຣະມັນ)

ສຳນັກງານ
ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ

ຫໍສະໝຸດແຫ່ງຊາດ
ຕູ້ ປ.ນ. 8818
ໂທ : (856-21) 251 405
ແຟັກ: (856-21) 213 029
E-mail : bailane@laotel.com

## ຄະນະຈັດທຳ

ທີ່ປຶກສາ : ດາລາ ກັນລະຍາ
: ບຸນຍົກ ແສນສຸນທອນ
ຫົວໜ້າ ບ.ກ : ກິງເດືອນ ເນດຕະວົງ
ຮອງຫົວໜ້າ ບ.ກ : ບຸນເລີດ ທຳມະຈັກ
ຜູ້ຊ່ວຍ ບ.ກ : ໂອທອງ ຄຳອິນຊູ
ຈັດໜ້າ ຄອມພິວເຕີ : ສີສຸພັນ ດວງມະນີ
ຕີພິມຄອມພິວເຕີ : ບົວສີ ສີປະເສີດ
ຖ່າຍພາບ : ຄຳແສງດາວ ປະຖົມມະວົງ
: ຄຳສິງ ວົງສະຫວ່າງ
: ໄພວົງ ທົງສັກສິດ
: ຄຳມຸກ ສີລືອາໄພ

✱ ຈັດພິມ ເພື່ອແຈກຢາຍ